**<u>ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ</u>**

**Copyright © 2008 by BAPTISTWAY PRESS®.**

**ສງວນລິກຂະສິດ**

ອະນຸຍາດໃຫ້ຄຣິສຕະຈັກເຮັດກ໊ອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ໄດ້ຄັດມາຈາກປື້ມພຣະຄັມພີທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິກຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດື່ອນ ມີນາ **2004**

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, Missions, Evangelism, and Ministry Team: Wayne Shuffield
Director, Bible Study/Discipleship Center: Dennis Parrott

Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Lesson 1, 2, 3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1, 2, 3
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 4, 5, 6, 7
Bounchanh Vongsurith, Lao Congregation of First Baptist Church, Amarillo, TX
Editor for Lessons 4, 5, 6, 7
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 8, 9, 10
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 8, 9, 10
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 11, 12, 13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 11, 12, 13
Phaisane Somsith, Homprakhoon Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

## ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 1
## ຮັບຜິດຊອບໃນການເປັນພະຍານ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ **1:1-8**

**ພູມຫລັງຂອງພຣະຄັມພີ:** ກິຈການ **1:1-11**

**ຈຸດສຳຄັນສຳລັບບົດຮຽນນີ້:** ພຣະເຢຊູຊົງສອນສາວົກຂອງພຣະອົງວ່າ ພວກເຂົາຕ້ອງເປັນພະຍານໃຫ້ແກ່ພຣະອົງ

**ຄຳຖາມເພື່ອການຄົ້ນຄວ້າ:** ທ່ານຈະເປັນພະຍານໃຫ້ແກ່ຜູ້ໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອໃຫ້ມີການຖວາຍຕົນເອງວ່າຈະເປັນພະຍານໃຫ້ແກ່ຝ່າຍພຣະເຢຊູ.

## ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ:

!) ຖາມນັກຮຽນ : ເຣື່ອງລາວຂອງພຣະເຢຊູຕົກມາເຖິງພວກເຮົາທຸກວັນນີ້ຢ່າງໃດ? ຊຶ່ງຈາກກຸ່ມນ້ອຍໆ ທີ່ຝູງຊົນທັງຫລາຍຄອຍຈ້ອງຕາຈະເອົາເຣື່ອງຢູ່ຕລອດເວລາ.

ໃຫ້ໜູນໃຈນັກຮຽນຄິດເຖິງການແບ່ງປັນຄວາມເຊື່ອຂອງເຫລົ່າສາວົກ. ໂປໂລໄດ້ຮັບຈົດໝາຍ ໃຫ້ໄປເຮັດຫຍັງແກ່ຄຣິສ ຕຽນທີ່ກຣີກແລະກຸງໂຣມ?

**2.** ບອກນັກຮຽນວ່າໃນວັນນີ້ພວກເຮົາຈະມາສຶກສາດ້ວຍກັນກ່ຽວກັບພຣະທັມຄັມພີກິຈການ. ìການຮຽນກິຈກັມî ຄືການເຮັດວຽກດ້ວຍຕົວຈິງ. ການທຳງານຮ່ວມກັບພຣະວິນຍານບໍຣິສຸດ ແລະພວກເຮົາກໍຈະໄດ້ເຫັນການທຳງານຂອງສາວົກຮ່ວມກັບ ພຣະວິນຍານ. ດ້ວຍຄວາມເຊື່ອດ້ວຍການອະທິຖານ ບັນດາເຫລົ່າສາວົກຈຶ່ງສາມາດສືບທອດມາໄດ້ເຖິງ **2000** ກວ່າປີມາແລ້ວ.

### ນຳສຶກສາພຣະຄັມພີ:

**3.** ອ່ານກິຈການ **1:1-5** ແລ້ວໃຫ້ອີກຄົນນຶ່ງອ່ານ ລູກາ **24:36-53** ແລ້ວບອກນັກຮຽນວ່ານີ້ແມ່ນບົດທີ່ຫຍໍ້ ແລະລູກາກໍໄດ້ ເລົ່າຕໍ່ໄປ ບອກນັກຮຽນດ້ວຍວ່າລູກາບັນທຶກມາຈາກການເລົ່າຕໍ່ປາກ ເພິ່ນບໍ່ໄດ້ເຫັນກັບຕາຂອງເພິ່ນເອງ. ແຕ່ດ້ວຍການຮຽນ ແລະການສຶກສານີ້ເອງ ເພິ່ນຈຶ່ງສາມາດບັນທຶກໄດ້ເໝືອນດັ່ງເຫັນກັບຕາຕົນເອງ.

**4.** ຊີ້ໃຫ້ເຫັນວ່າກິຈການ **1:3** ກ່າວວ່າອົງພຣະເຢຊູພະຍາຍາມຈະຕຽມຫລາຍຢ່າງເພື່ອຈະຢັ້ງຢືນໃນການຄືນພຣະຊົນຂອງ ພຣະອົງເອງ. ທ່ານຕ້ອງການການຢັ້ງຢືນຢ່າງໃດ ເພື່ອທ່ານຈະໄດ້ຮັບຮູ້ວ່າພຣະເຢຊູຊົງຄືນພຣະຊົນ**?** ແລະຍັງມີຊີວິດຢູ່**?**

**5.** ຈົ່ງບອກນັກຮຽນວ່າພຣະເຢຊູຊົງສັນຍາວ່າ ພວກທ່ານຈະໄດ້ຮັບຣິດເດດແຫ່ງພຣະວິນຍານບໍຣິສຸດ ນີ້ກໍແມ່ນການຈັດຕຽມ ຄືນງານຂອງພຣະອົງ.

ອ່ານກິຈການ **1:6-8** ພຣະເຢຊູຈະປະທານໃຫ້ທຸກໆຄົນຈັດຕຽມແກ່ທຸກໆຄົນ ເພື່ອທຸກຄົນຈະໄດ້ເປັນພະຍານຝ່າຍພຣະອົງ.
ຖາມ: ເມື່ອທ່ານໄດ້ຮັບເອົາພຣະເຢຊູແລ້ວ ພຣະວິນຍານໄດ້ເຂົ້າມາຫາທ່ານຢ່າງໃດ**?**

**6.** ຖາມ: ພຣະເຢຊູຄຣິດໝາຍຄວາມວ່າຢ່າງໃດ ເມື່ອພຣະອົງຊົງກ່າວວ່າ ທ່ານທັງຫລາຍຈົ່ງເປັນພະຍານຝ່າຍເຮົາ. ຈົ່ງໃຫ້ ໂອກາດແກ່ນັກຮຽນຄິດຈັກເລັກນ້ອຍ ແລ້ວໃຫ້ເຂົາເຈົ້າອອກຄຳຄິດເຫັນ. ແມ່ນຫຍັງຄືຄວາມແຕກຕ່າງຣະຫວ່າງທຳງານການ ເປັນພະຍານແລະອອກໄປເປັນພະຍານ.

ເຕືອນນັກຮຽນໃຫ້ຄິດເຖິງພຣະທັມມັດທາຍ **28:18-20.** **(**ການເປັນພະຍານແມ່ນການສ້າງສາວົກ ແຕ່ການອອກໄປເປັນພະ ຍານແມ່ນການໄປເປັນຕົວຢ່າງໃນຊີວິດ.**)**

<u>**ນຳໃຊ້ໃນຊີວິດປະຈຳວັນ**</u>

**7.** ນຳພານັກຮຽນໃຫ້ເບິ່ງຫົວຂໍ້ນ້ອຍໆນີ້ ອານາຈັກສວັນບັນຊາທ່ານຢ່າງໃດຈົ່ງທຳຕາມນັ້ນເຖີ້ນ

**8.** ປິດການຮຽນໃນວັນນີ້ດ້ວຍການເຕືອນນັກຮຽນວ່າ ສາວົກມີຄວາມເຊື່ອຈົ່ງຈະສາມາດເປັນພະຍານ ແລະນຳພາຄົນທັງ ຫລາຍມາເຖິງ **2000** ປີ. ຂ່າວປະເສີດຂອງພຣະເຢຊູຢູ່ໃນມືຂອງທ່ານ.

**12.** ອະທິຖານປິດ ຕຽມຕົວນະມັສການ.

*ດຣ. ບຸນໂຮມ ພົມມະຈັນ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 2
# ຈົ່ງເພິ່ງອາສັຍພຣະວິນຍານບໍຣິສຸດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ **1:12-14; 2:1-18**

**ພູມຫລັງຂອງພຣະຄັມພີ:** ກິຈການ **1:12-2:36**

**ຈຸດສຳຄັນສຳລັບບົດຮຽນນີ້:** ພຣະວິນຍານບໍຣິສຸດຊົງນຳພາຜູ້ທີ່ເປັນພະຍານຝ່າຍພຣະອົງ

**ຄຳຖາມເພື່ອການຄົ້ນຄວ້າ:** ພວກເຮົາຈະເປັນພະຍານອັນໃດ ພຣະວິນຍານບໍຣິສຸດຊົງນຳ ຫລື ອີງຕາມກຳລັງຂອງຕົນເອງ.

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະໄດ້ຊັ່ງຊາຕີຣາຄາວ່າພວກເຮົາໄດ້ເພິ່ງພຣະວິນຍານບໍຣິສຸດແລ້ວຫລືຍັງທີ່ຈະເປັນພະຍານຝ່າຍພຣະເຢຊູ.

## ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ:

!" ຖາມນັກຮຽນ ແມ່ນຜູ້ໃດແດ່ທີ່ມີປະສົບການກ່ຽວກັບການລໍຖ້າເຊັ່ນ: ລໍຖ້າການຄອດລູກ, ລໍຖ້າຟັງຂ່າວຈາກທ່ານໝໍ, ຫລືວ່າລໍຖ້າການຂໍຢືມເງິນຊື້ເຮືອນວ່າຈະໄດ້ຫລືບໍ່?
ເຊີນຄົນນຶ່ງຫລືສອງຄົນອອກຄວາມຄິດເຫັນໂດຍຫຍໍ້ໆ ໃຫ້ກ່າວເຖິງຄວາມຮູ້ສຶກ. ຈົ່ງຄິດວ່າມີສອງຢ່າງຄືຂ່າວດີແລະຂ່າວຮ້າຍ.

**2.** ໃຫ້ຄົນນຶ່ງກ່າວເຖິງປະສົປການກ່ຽວກັບໝໍ້ໄຟຣົດຕາຍ. ໃຫ້ບັນລະຍາຍວ່າເປັນຢ່າງໃດ? ຈະເຄື່ອນຣົດອອກຈາກທີ່ກໍຍາກ. ຖ້າຈະເຄື່ອນຈິງໆ ກໍຕ້ອງໃຊ້ຫລາຍຄົນ.
ຫັນມາຫາຄຳວ່າຈິດວິນຍານ. ໃຫ້ອະທິບາຍຈິດວິນຍານທີ່ຕາຍ, ລອງຄິດເບິ່ງຈິດວິນຍານຂອງຕົນເອງເບິ່ງດູວ່າເປັນຢ່າງໃດ? ຈົ່ງໃຫ້ນັກຮຽນສັບປ່ຽນກັນອະທິບາຍ

**3.** ອ່ານພຣະທັມກິຈການ **1:4** ຖາມ: ທ່ານຄິດວ່າພວກສາວົກຈະຄິດຢ່າງໃດໃນການລໍຖ້າທີ່ພຣະບິດາຊົງສັນຍາແລະສັ່ງໃຫ້ລໍຖ້າ? ຈົ່ງຈຳໄວ້ວ່າໃນຂະນະທີ່ພຣະເຢຊູສັ່ງໃຫ້ພວກເຂົາລໍຖ້ານີ້ ແມ່ນພຣະອົງຕຽມສາກໝໍ້ໄຟຈິດວິນຍານອງພວກເຂົາ. ພວກເຂົາມາຮວມກັນແລ້ວກໍພາກັນອ້ອນວອນອະທິຖານ.

### ນຳພາສຶກສາພຣະຄັມພີ:

**4.** ນຳພານັກຮຽນໃຫ້ອ່ານພຣະຄັມພີໃນໃຈ ຈົ່ງລໍຖ້າພຣະວິນຍານບໍຣິສຸດ. ສອງສາມຄົນກໍໄດ້ອ່ານພຣະ

ທັມກິຈການ **1:12-14** ປ່ອຍໂອກາດໃຫ້ນັກຮຽນສົນທະນາກັນຈັກໜ່ອຍ. ພວກເຂົາເຫັນພຣະເຢຊູຈາກພວກເຂົາໄປພວກເຂົາເຫັນກັບຕາ.

**5.** ຖາມນັກຮຽນ: ເປັນຫຍັງບັນດາສາວົກທັງຫລາຍຈຶ່ງລໍຖ້າ**?** ພວກເຂົາເຈົ້າລໍຖ້າດ້ວຍແນວຄິດຢ່າງດຽວກັນ (ແນວຄິດຢ່າງດຽວກັນ, ແລະລໍຖ້າ**)** ໃຫ້ຄົນນຶ່ງອ່ານພຣະຄັມພີ ເຢເຣມີຢາ **29:11-13.** ຄໍາເວົ້າຂອງເຢເຣມີຢາກ່າວວ່າຢ່າງໃດ, ກ່ຽວກັບການລໍຖ້າ, ແລະມີເປົ້າໝາຍຢ່າງໃດໃນການອ້ອນວອນອະທິຖານ**?**

**6.** ບອກນັກຮຽນໃຫ້ຟັງຄັກໆໃນປໂຍກຕໍ່ໄປນີ້: ລໍຖ້າບໍ່ແມ່ນຢຸດຊະງັກ, ບໍ່ແມ່ນຢູ່ເສີຍໆ, ຢູ່ລ້າໆ ບໍ່ແມ່ນພຣະເຈົ້າຢຸດທໍາງານ. ການລໍຖ້າເປັນສ່ວນນຶ່ງຂອງການທໍາງານຂອງພຣະເຈົ້າໃນຊີວິດຂອງພວກເຮົາ. ການລໍຖ້າທີ່ມີເປົ້າໝາຍ, ການລໍຖ້າທີ່ມີຈຸດປະສົງ ແລະການຊອກສແວງຫາພຣະປະສົງຂອງພຣະເຈົ້າ ເຮົາກໍຕ້ອງໄດ້ລໍຖ້າ ລໍຖ້າຢ່າງມີຄວາມຫວັງ.

**7.** ອ່ານ ກິຈການ **2:1-13** ເມື່ອທຸກຄົນກໍາລັງຟັງຢູ່ນີ້ເຮົາຕ້ອງບອກນັກຮຽນວ່າພວກເຮົາກໍາລັງເນັ້ນໜັກກ່ຽວກັບພຣະວິນຍານບໍຣິສຸດ, ພຣະວິນຍານຈະສະເດັດມາໃນວັນນີ້ ທຸກຄົນຈະໄດ້ເຫັນຕາມທີ່ຂ່າວປະເສີດໄດ້ກ່າວໄວ້. ຖາມ: ພຣະວິນຍານບໍຣິສຸດມີໜ້າທີ່ຢ່າງໃດ ແລະພຣະອົງມີເປົ້າໝານຢ່າງໃດ**?** ໃຫ້ໂອກາດນັກຮຽນຄິດແລະຕອບຄໍາຖາມ.

**8.** ໃຫ້ຄົນນຶ່ງອ່ານກິຈການ **2:14-18.** ເຕືອນນັກຮຽນວ່າເປໂຕມີປະສົບການໃນການປະຕິເສດພຣະເຢຊູ. ຫລັງຈາກທີ່ເພິ່ນໄດ້ປະຕິເສດພຣະເຢຊູນັ້ນແລ້ວ **50** ວັນ ມີຫຍັງເກີດຂຶ້ນໃນຊີວິດຂອງເພິ່ນ**?**

ໃຫ້ອີກຄົນນຶ່ງອ່ານ **2:17-18** ແລ້ວຖາມ: ເປັນຫຍັງຜູ້ທໍານວາຍຈຶ່ງວ່າ ແລ້ວພຣະອົງຈະຖອກເທພຣະວິນຍານບໍຣິສຸດຂອງພຣະອົງລົງມາຖ້າມກາງພວກເຂົາ ນີ້ເປັນຄວາມຈິງບໍ່**?**

## <u>ນໍາໃຊ້ໃນຊີວິດປະຈໍາວັນ</u>

**9.** ໃຫ້ນັກຮຽນທຸກຄົນຫລັບຕາແລະງຽບຢູ່ ໃຫ້ຟັງຄໍາເວົ້າຕໍ່ໄປນີ້:

- ຂ້າພະເຈົ້າເຊື່ອວ່າພຣະວິນຍານບໍຣິສຸດຂອງພຣະເຈົ້າ ແມ່ນຂອງພຣະຣາຊທານເພື່ອຜູ້ທີ່ເຊື່ອທັງຫລາຍ ລວມທັງຂ້າພະເຈົ້າດ້ວຍ.
- ຂ້າພະເຈົ້າເຊື່ອວ່າພຣະວິນຍານບໍຣິສຸດໄດ້ປະທານສິດໃຫ້ບັນດາເຫລົ່າສາວົກເປັນພິເສດໃນການເປັນພະຍານນີ້, ແລະຂ້າພະເຈົ້າກໍເຊື່ອວ່າພຣະວິນຍານບໍຣິສຸດໄດ້ປະທານໃຫ້ແກ່ຂ້າພະເຈົ້າດ້ວຍ.
- ຂ້າພະເຈົ້າເຊື່ອວ່າຄົນທີ່ຢູ່ຂ້າງໆຂ້າພະເຈົ້າ ພຣະວິນຍານບໍຣິສຸດກໍໄດ້ໃຫ້ພວກເພິ່ນເໝືອນກັນເພື່ອເພິ່ນຈະໄດ້ເປັນພະຍານຝ່າຍພຣະອົງ.

**10.** ອະທິຖານປິດ ຕຽມຕົວນະມັສການ.

ດຣ. ບຸນໂຮມ ພົມມະຈັນ

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 3
# ສັນຍາວ່າຈະເປັນພະຍານເພື່ອພຣະເຢຊູ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ **3:1-10**

**ພູມຫລັງຂອງພຣະຄັມພີ:** ກິຈການ ບົດທີ **3**

**ຈຸດສຳຄັນສຳລັບບົດຮຽນນີ້:** ສາວົກຂອງພຣະເຢຊູເປັນພະຍານໂດຍການເປັນຫ່ວງໃນຄວາມຕ້ອງການຂອງຝູງຊົນ ທາງດ້ານຮ່າງກາຍແລະທາງດ້ານຈິດວິນຍານ

**ຄຳຖາມເພື່ອການຄົ້ນຄວ້າ:** ແມ່ນຫຍັງຄືຄວາມຕ້ອງການຂອງຝູງຊົນ ທີ່ພຣະເຈົ້າເປັນຫ່ວງຫລາຍກວ່າ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຕັດສິນໃຈວ່າຈະເຮັດຢ່າງໃດ ເພື່ອຈະຕອບສນອງຄວາມຕ້ອງການຂອງຝູງຊົນທັງຫລາຍໃຫ້ເທົ່າທຽມກັນ ບໍ່ວ່າດ້ານຮ່າງກາຍ ແລະດ້ານຈິດວິນຍານ.

## ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ

ແຈັສຊີ ມີອາຍຸ **67** ປີ ລາວມີບັນຫາຫລາຍກ່ຽວກັບຮ່າງກາຍຂອງລາວ ການໄປມາກໍບໍ່ດີ, ການປາກເວົ້າກໍບໍ່ຊັດເຈນ ແນວຄິດກໍດີວັນດີຄືນ ແຕ່ວ່າລາວຮັກພຣະເຈົ້າແລະໂບດຂອງລາວຫລາຍ. ລາວຢູ່ເຮືອນທີ່ຣັຖບານຈັດຕຽມໃຫ້ ແລະກໍຢູ່ຄົນດຽວດ້ວຍ. ລາວໄປໂບດດ້ວຍຣົດບັສຂອງໂບດມາຮັບແຕ່ລະອາທິດ. ຍ້ອນລາວເປັນຄົນເສັຍອົງຄະຢ່າງນັ້ນ ທາງເຮືອນພັກຂອງລາວຈຶ່ງຈັດຕຽມຜູ້ຊ່ວຍໃຫ້ແກ່ລາວ. ລາວອາບນ້ຳອາທິດລະເທື່ອຄືວັນອັງຄານ. ຈົນຈະເຖິງວັນອາທິດຕົນຕົວຂອງລາວກໍບໍ່ສະອາດປານໃດ ວັນນັ້ນລາວມາໂບດດ້ວຍຮ່າງກາຍບໍ່ສະອາດປານໃດ ເຄື່ອງນຸ່ງກໍມີກິ່ນແດ່.

ແຈັສຊີ ປາກບໍ່ໄດ້ດີ ການອະທິບາຍກໍບໍ່ແຈ້ງ ແຕ່ວ່າໜ້າຕາຂອງລາວຈະຍິ້ມຢູ່ສເມີ. ຜູ້ໃດຜ່ານມາລາວຈະຍິ້ມໃຫ້ຕລອດເວລາ.

**2.** ຖາມ: ຖ້າແຈັສຊີ ເປັນສະມາຊິກໃນໂບດຂອງພວກເຮົາ, ພວກເຮົາຈະອະທິບາຍເຖິງຄວາມຮັກພຣະເຈົ້າວ່າພຣະອົງຊົງຮັກລາວຢ່າງໃດ?

### ນຳພາສຶກສາພຣະຄັມພີ

**3.** ເຊີນຄົນນຶ່ງອ່ານກິຈການ **3:1-5.** ຖາມ: ພວກເຮົາຈະສົມທຽບສະພາບການຂອງແຈັສຊີ ກັບຄົນເປັ້ຍຂໍທານຢູ່ຕໍ່ໜ້າປະຕູໂບດແຕ່ລະວັນນັ້ນຢ່າງໃດ? ໃຫ້ເຮົາຮູ້ວ່າຄົນເປັ້ຍຂໍທານເມື່ອເຫັນເປໂຕແລະໂຢຮັນແລ້ວ

ໜ້າທີ່ຂອງລາວກໍຄືການຂໍເງິນ.  ໃຫ້ອ່ານ ໂຢຮັນ **5:1-8** ແລ້ວໃຫ້ນັກຮຽນສົນທະນາກ່ຽວກັບຄຳຖາມທີ່ພຣະເຢຊູຖາມ, ໜູນໃຈບອກຊາຍຄົນນັ້ນວ່າເຈົ້າເປັນຄົນສຳຄັນ ທຸກຄົນຈະເບິ່ງເຈົ້າໃນວັນນີ້. ຖາມ: ຖ້າທ່ານເປັນຄົນເປ້ຍໃນເວລານີ້ທ່ານຈະຄິດຢ່າງໃດ**?**   ແລະທ່ານຈະຄິດຢ່າງໃດໃນຄວາມແຕກຕ່າງຂອງຊາຍຄົນນີ້**?** ຫລາຍຄົນທີ່ເຫັນລາວຢູ່ທຸກວັນຈະຄິດແນວໃດ**?**

**5.** ອ່ານກິດ **3:6-10.** ກ່າວສັ້ນໆ ກ່ຽວກັບສິດອຳນາດທີ່ເປໂຕເຮັດໄປ, ນີ້ແມ່ນຂອງພຣະຣາຊທານຈາກອົງພຣະເຢຊູຄຣິດ ທີ່ເປໂຕສາມາດປິ່ນປົວຄົນເຈັບໃຫ້ຫາຍໄດ້. ອະທິບາຍໃຫ້ນັກຮຽນເຂົ້າໃຈໃນອຳນາດຢ່າງນີ້ດ້ວຍ.

**6.** ຫົວຂໍ້ຂອງບົດຮຽນ **ໄສັນຍາວ່າຈະເປັນພະຍານເພື່ອພຣະເຢຊູໃ** ຖ້າພວກເຮົາຫາກເປັນພະຍານຝ່າຍພຣະອົງ ພຣະອົງກໍຈະປະທານໃຫ້ພວກເຮົາມີອຳນາດຢ່າງໃດຢ່າງນຶ່ງ.  ຊາຍຄົນນີ້ ຖ້າຈະເວົ້າແລ້ວລາວກໍເປັນໜັກຫລາຍ ແລະກໍເປັນຢູ່ດົນນານເກີນກວ່າມະນຸດຈະປິ່ນປົວໄດ້.

## <u>ນຳໃຊ້ໃນຊີວິດປະຈຳວັນ.</u>

**7.** ຢູ່ໃນທັມນຽມຂອງພວກເຮົາ, ເງິນຈະຕ້ອງເປັນຕົ້ນເຫດຂອງທຸກຢ່າງ.   ຖ້າບໍ່ມີເງິນໂຣກພັຍໄຂ້ເຈັບກໍບໍ່ຫາຍ. ໃນກໍຣະນີຂອງ ແຈັສຊີ  ຕໍ່ຈາກນັ້ນມາຫ້ອງຮຽນກໍໄດ້ຜັດປ່ຽນກັນໄປທຳຄວາມສະອາດແລະເບິ່ງແຍງ ແຈັສຊີ. ນີ້ເປັນການກະທຳທີ່ດີທີ່ສຸດຂອງຄຣິສຕຽນ

**9.** ອະທິຖານຕຽມຕົວນະມັສການພຣະເຈົ້າ

*ດຣ. ບຸນໂຮມ ພົມມະຈັນ*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 4

# ອ້ອນວອນໃຫ້ກ້າຫານໃນການເປັນພະຍານ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ **4:5-31**

**ພູມຫລັງຂອງພຣະຄັມພີ:** ກິຈການ **4**

**ຈຸດສຳຄັນສຳລັບບົດນີ້:** ພວກສາວົກອ້ອນວອນແລະກໍລິງມືໃນການຮັບໃຊ້ດ້ວຍຄວາມກ້າຫານເພື່ອເປັນພະຍານເຣື່ອງພຣະເຢຊູ.

**ຄຳຖາມເພື່ອການຄົ້ນຄວ້າ:** ເຮັດແນວໃດພວກເຮົາຈຶ່ງຈະມີຄວາມກ້າຫານໃນການຮັບໃຊ້ເປັນພະຍານເຣື່ອງອົງພຣະເຢຊູ**?**

**ຈຸດປະສົງຂອງບົດຮຽນນີ້:** ຊອກຫາທາງເພື່ອຂ້າພະເຈົ້າຈະມີຄວາມກ້າຫານໃນການຮັບໃຊ້ເປັນພະຍານເຣື່ອງພຣະເຢຊູ.

## ບົດນຳ

ຕາມປົກກະຕິເວລາສາມໂມງກາງເວັນຄົນງ່ອຍມັກໄປຂໍທານ ເພື່ອນໄດ້ຊ່ອຍຫາມລາວໄປທີ່ປະຕູ ໂງາມໂ ທີ່ພຣະວິຫານບ່ອນນັ້ນລາວຄິດວ່າຈະນັ່ງທັງວັນຂໍທານແລະຈະຢູ່ທີ່ນັ້ນຂໍທານໄປຈົນຕາຍ.

ຄົນງ່ອຍນັ້ນເມື່ອໄດ້ເຫັນເປໂຕແລະໂຢຮັນພວມຍ່າງເຂົ້າໄປໃນພຣະວິຫານຄິດວ່າຈະໄດ້ເງິນ. ລາວຈຶ່ງຂໍ ແຕ່ເຫັນວ່າຜິດຫວັງເພາະພວກເຂົາບໍ່ມີເງິນແຕ່ຄົນງ່ອຍບໍ່ຮູ້ເລີຍວ່າພວກເຂົາມີຂອງດີກວ່າເງິນແລະຄຳ. ເປໂຕໄດ້ສັ່ງໃຫ້ຄົນງ່ອຍນັ້ນໃນພຣະນາມຂອງອົງພຣະເຢຊູວ່າ ໂຈົ່ງຢືນຂຶ້ນແລະຍ່າງໄປໂ (ກິຈການ **3:6;** ເບິ່ງ **3:1-10,** ບົດຮຽນ **3).** ຄົນງ່ອຍໄດ້ເຮັດຕາມຄຳສັ່ງຂອງເປໂຕແລະກໍຍ່າງໄປມາໄດ້. ໃຫ້ພວກເຮົາວາດພາບເບິ່ງເຖິງຄວາມດີໃຈຂອງຄົນງ່ອຍຕອນລາວຢືນຂຶ້ນແລະຍ່າງໄດ້. ຕໍ່ໄປນີ້ລາວບໍ່ຕ້ອງການຄົນໃດຫາມລາວໄປມາອີກແລ້ວ. ລາວສາມາດຍ່າງແລະແລ່ນໄດ້ໄປທາງໃດຕາມໃຈຊອບ ສິ່ງນີ້ເກີດຂຶ້ນເພາະອົງພຣະເຢຊູ ພຣະຜູ້ຊ່ອຍ. ເປໂຕແລະໂຢຮັນຮູ້ວ່າພວກເຂົາຕ້ອງເຮັດພາຣະກິດຂອງອົງພຣະຄຣິດ.

ຄົນທັງເມືອງໄດ້ຍິນເຣື່ອງທີ່ເກີດຂຶ້ນກັບຄົນງ່ອຍນັ້ນຢ່າງວອງໄວ. ມີຄົນກຸ່ມໃຫຍ່ໄດ້ມາຫຸ້ມ ແລະເປໂຕຢືນຂຶ້ນດ້ວຍຄວາມກ້າຫານປະກາດເຣື່ອງຂອງອົງພຣະເຢຊູ ຜູ້ທີ່ພວກເຂົາປະຕິເສດແລະເອົາໄປຄຶງໃຫ້ຕາຍທີ່ໄມ້ກາງແຂນ, ແຕ່ໃນທີ່ສຸດພຣະເຈົ້າໄດ້ດົນບັນດານໃຫ້ພຣະເຢຊູຄືນມາຈາກຕາຍ **(3:15-16).** ພວກຊາດູກາຍຄິດວ່າເປໂຕແລະໂຢຮັນຍົວະໃຫ້ປະຊາຊົນຫລົງທາງດ້ວຍການເວົ້າເອງວ່າ ພຣະເຢຊູໄດ້ຄືນມາຈາກຕາຍແລ້ວ ດັ່ງນັ້ນ, ພວກຊາດູກາຍສັ່ງໃຫ້ຈັບເປໂຕແລະໂຢຮັນ. ພວກຊາດູກາຍບໍ່ເຊື່ອວ່າຄົນຕາຍແລ້ວຄືນມາໄດ້ ແລະເຂົາເຊື່ອແຕ່ປຶ້ມຫ້າເຫຼັ້ມແລກໃນພຣະຄັມພີເດີມຊຶ່ງບໍ່ເຫັນຂໍ້ໃດເວົ້າເຖິງຄົນຄືນມາຈາກຕາຍ. ແຕ່ພວກຟາຣີຊາຍເປັນຄົນທັມມະດາບໍ່ແມ່ນພວກປະໂຣຫິດ ທີ່ເຊື່ອວ່າມີຊີວິດຫລັງຈາກຕາຍ.

ການປະກາດຂອງເປໂຕວ່າອົງພຣະເຢຊູໄດ້ຄືນມາຈາກຕາຍນັ້ນເປັນການທຳລາຍອຳນາດທີ່ຄົນນັບຖືສາສນາຂອງພວກຊາດູກາຍ. ການປົວຄົນໃຫ້ດີພະຍາດນັ້ນແມ່ນພະລັງອຳນາດຈາກທາງເທິງທີ່ຜູ້ເຫັນນັ້ນບໍ່

ສາມາດປະຕິເສດໄດ້, ດັ່ງນັ້ນ, ພວກຊາດູກາຍຕ້ອງຈັດການກັບອັຄສາວົກທັງສອງຄົນໂດຍໄວ.

## ແນະນຳການສອນ

**ແຜນການສອນ-ວິທີການສອນນັ້ນອາດສາມາດໃຊ້ແຕກຕ່າງກັນ**

1. ກ່ອນເລີ້ມສອນຮ້ອງຂໍໃຫ້ຄົນໃດຄົນນຶ່ງນຳພາໃນການອ້ອນວອນ ແຕ່ຕ້ອງຖາມກ່ອນວ່າພວກເຂົາສາມາດອ້ອນວອນໃນກຸ່ມຫລືບໍ່?
2. ໃຫ້ຂຽນລາຍຊື່ຂອງຄົນເກ່ງກ້າໃສ່ກະດານທີ່ພວກສະມາຊິກໃນຫ້ອງຮຽນຮູ້. ບອກໃຫ້ສະມາຊິກຂຽນຊື່ຄົນກ້າຫານນັ້ນລົງໂດຍບໍ່ຕ້ອງອະທິບາຍອັນໃດ. ບອກໃຫ້ສົນທະນາກັນໃນເຣື່ອງຕໍ່ໄປນີ້:
    - ບໍ່ໃຫ້ເວົ້າເຣື່ອງສົງຄາມ ບໍ່ຕ້ອງອະທິບາຍວ່າເປັນຫຍັງຈຶ່ງຂຽນຊື່ຂອງຄົນນັ້ນໃສ່ກະດານ.
    - ກັດລີ້ນໄວ້ ບໍ່ໃຫ້ຕຳໜິວ່າເປັນຫຍັງທ່ານຈຶ່ງຂຽນຊື່ຄົນພວກນັ້ນລົງ
3. ຮ້ອງຂໍໃຫ້ມີຄົນຈົດຊື່ຂອງຄົນສເນີນັ້ນ. ຖ້າມີຊື່ຄົນຂຽນໃສ່ກະດານແລ້ວໃຫ້ພາກັນສົນທະນາກັນວ່າເປັນດ້ວຍເຫດໃດຄົນທີ່ມີຊື່ໃນກະດານນັ້ນຈຶ່ງເປັນຄົນເກ່ງກ້າ ຫລືບໍ່ເກ່ງ?
4. ບອກສະມາຊິກໃນຫ້ອງຮຽນໃຫ້ຮູ້ວ່າວັນນີ້ພວກເຂົາຈະໄດ້ຮຽນເຣື່ອງຄົນເກ່ງກ້າທີ່ແທ້ຈິງ
5. ເຊີນໃຫ້ຄົນນຶ່ງເວົ້າຄືນເຖິງເຣື່ອງໃນບົດຮຽນທີສາມ, ກິຈການ **3:1-10** ໃຫ້ສລູບສັ້ນໆ ກິຈການ **3:11-4:4.**
6. ຮ້ອງຂໍໃຫ້ຄົນອ່ານ ກິຈການ **4:5-12.** ບອກໃຫ້ຄົນໃດຄົນນຶ່ງເລົ່າເຖິງປະສົບການຂອງອັຄສາວົກຕໍ່ຜູ້ປົກຄອງແລະເຈົ້າໜ້າທີ່. ຂໍ້ເຫລົ່ານີ້ໄດ້ສອນເຣື່ອງພຣະເຈົ້າ ເຣື່ອງຄົນ ແລະເຣື່ອງຊີວິດຢ່າງໃດ?
7. ຮ້ອງໃຫ້ຄົນນຶ່ງອ່ານ ກິຈການ **4:13-22.** ບອກວ່າຄວາມໝາຍວ່າກ້າຫານນັ້ນແມ່ນຫຍັງ. ຖາມວ່າຄົນງ່ອຍນັ້ນມີອາຍຸຫລາຍກວ່າ **40** ປີນັ້ນມີຄວາມສຳຄັນອັນໃດ?
8. ເປໂຕແລະໂຢຮັນໄດ້ມີນາມວ່າເປັນຄົນທັມມະດານັ້ນມີຄວາມໝາຍອັນໃດ? ບົດຮຽນປະກອບຊີວິດນີ້ຈະຊ່ອຍທ່ານຫຍັງແດ່?
9. ບອກໃຫ້ຄົນນຶ່ງອ່ານ ກິຈການ **4:23-31** ສລູບໃຫ້ເວົ້າເຖິງຄວາມສຳຄັນຂອງຄຣິສຕະຈັກທ້ອງຖິ່ນໃນໝູ່ບ້ານ.
10. ບອກໃຫ້ຄົນເກົ່າຜູ້ອ້ອນວອນເປີດ ໃຫ້ອ້ອນວອນປິດກ່ອນຈາກກັນໄປ.

*ດຣ. ບຸນ ວົງສຸຣິດທ໌*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 5
# ຕອບສນອງຄວາມຕ້ອງການ

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ **6:1-7; 11:27-30**

**ພູມຫລັງຂອງພຣະຄັມພີ:** ກິຈການ **6:1-15; 8:1;11:27-30; 12:25**

**ຈຸດສຳຄັນສຳລັບບົດນີ້:** ຄຣິສຕະຈັກໃນສັດຕະວັດທຳອິດໄດ້ຊ່ອຍຜູ້ທຸກຍາກທັງໃກ້ແລະໄກ.

**ຄຳຖາມເພື່ອການຄົ້ນຄວ້າ:** ການຕອບສນອງຕໍ່ຄວາມຕ້ອງການຂອງຄົນຍາກຈົນນັ້ນໄດ້ກ່ຽວກັບການເປັນພະຍານຢ່າງໃດ**?**

**ຈຸດປະສົງຂອງບົດຮຽນນີ້:** ເພື່ອວາງແຜນການເອົາໄວ້ຢ່າງໜ້ອຍອັນນຶ່ງໃນເມື່ອຊ່ອຍຄົນທຸກຍາກນັ້ນແລ້ວເພື່ອຈະມີໂອກາດເປັນພະຍານເພາະຜົນທີ່ຕາມມາ.

## ບົດນຳ

ຕາມປົກກະຕິແລ້ວພວກເຮົາມັກເວົ້າວ່າມະນຸດເຮົາມີສອງພາກສ່ວນບໍ່ຄືກັນ: ຮ່າງກາຍແລະຈິດວິນຍານ. ຖ້າພວກເຮົາຄິດຢ່າງນີ້ພວກເຮົາກໍມີຄວາມເຂົ້າໃຈເໝືອນພວກກຣີກ. ຕາມພຣະຄັມພີແລ້ວພວກເຮົາເຫັນວ່າບຸກຄົນມີຮ່າງກາຍ, ຈິດໃຈ, ຈິດວິນຍານ ແຕ່ສິ່ງນີ້ເຮັດໃຫ້ເປັນຄົນດຽວຢ່າງຄົບຖ້ວນ. ຕາມຄວາມເຂົ້າໃຈຂອງນັກປັສຍາຂອງພວກກຣີກຄື ປລາໂຕ, ເບິ່ງຄົນໃນແງ່<u>ມີ</u>ຈິດວິນຍານ, ແຕ່ຕາມພຣະຄັມພີແລ້ວແມ່ນຄົນເຮົາ<u>ເປັນ</u>ຈິດວິນຍານ. ຕົວຢ່າງໃນການຄືນມາຈາກຕາຍ, ມະນຸດມີຄົບຖ້ວນຄື ຮ່າງກາຍ, ຈິດໃຈ, ແລະຈິດວິນຍານໄດ້ຄືນມາໃນຮ່າງກາຍ **(**ເບິ່ງ **1** ກຣທ **15),** ພວກເຮົາໄດ້ເສັຽໄປ ຕາຍແຕ່ຮ່າງກາຍແຕ່ໄດ້ພົ້ນດ້ານຈິດວິນຍານ. ອົງພຣະເຢຊູໄດ້ຊ່ອຍຄົນເຮົາຢ່າງຄົບຖ້ວນ.

ສິ່ງສຳຄັນໃນບົດນີ້ແມ່ນການຮັບໃຊ້ຕໍ່ຄວາມຕ້ອງການຂອງຄົນອື່ນ ເມື່ອເຮັດແລ້ວກໍຈະມີໂອກາດບອກເຣື່ອງຂອງອົງພຣະເຢຊູ. ລູກາເປັນຜູ້ຈົດບັນທຶກໄວ້ປື້ມກິຈການແລະປື້ມລູກາ. ໃນປື້ມລູກາອົງພຣະເຢຊູເປັນຫ່ວງເປັນໃຍຕໍ່ຄົນທຸກຈົນເພາະພວກເຂົາໄດ້ຖືກແຍກອອກຈາກສັງຄົມ ແລະບໍ່ມີສິດອຳນາດແນວໃດເລີຍ. ອົງພຣະເຢຊູໄດ້ຍົກເອົາຕົວຢ່າງຂອງຄົນຍາກຈົນເຣື່ອງໄທຊາມາເຣັຽຜູ້ໃຈດີຂຶ້ນມາເວົ້າ **(**ລກ **10:30-37),** ມີຊາຍຄົນນຶ່ງຖືກຕີ, ຖືກປະຖິ້ມໄວ້ແຄມທາງ, ລາວຕ້ອງການຄວາມຊ່ອຍເຫລືອ, ແຕ່ແມ່ນໄທຊາມາເຣັຽຜູ້ທີ່ພວກຢິວປະຕິເສດເປັນຜູ້ຊ່ອຍ. ເຣື່ອງລູກຫລົງເສັຽ **(**ລກ. **15:11-32)** ໃນພາວະສິ້ນເນື້ອປະດາຕົວນັ້ນແມ່ນເຣື່ອງຂອງລູກທີ່ຫລົງເສັຽ. ຕາມຫລັກສະນະຂອງອົງພຣະເຢຊູແລ້ວ, **Ì**ພຣະອົງສະເດັດໄປທຸກຫົນທຸກແຫ່ງເຮັດຄຸນງາມ ຄວາມດີ.**î** (ກຈກ **10:38).** ອົງພຣະເຢຊູຊົງຮັກຄົນຢ່າງຄົບຖ້ວນໃນສະພາບທີ່ເຂົາເປັນມະນຸດ, ພວກເຮົາຖືກສັ່ງໃຫ້ຮັບໃຊ້ຕໍ່ຄວາມຕ້ອງການຂອງຄົນອື່ນເຮັດຕາມຕົວຢ່າງຂອງອົງພຣະເຢຊູ.

## ແນະນຳການສອນ

**ແຜນການສອນ-ວິທີການສອນນັ້ນອາດສາມາດໃຊ້ແຕກຕ່າງກັນ**

**11.** ກ່ອນສອນໃຫ້ຊອກຫາສອງຄົນມາຊ່ວຍ. ຜູ້ຊ່ວຍນັ້ນຈະມີພາກສ່ວນຂອງຕົນເອງໃນບົດຮຽນ. ຕ້ອງຊອກເອົາຜູ້ຊ່ວຍໃຫ້ໄດ້ແຕ່ຫົວທີ. ບອກໃຫ້ຜູ້ຊ່ວຍທ້າງຫາສິ່ງປະກອບເປັນຕົວຢ່າງ ແລະບອກເຂົາວ່າທ່ານຍິນດີທີ່ຈະຊ່ວຍຖ້າມີຄວາມຕ້ອງການ.

**12.** ເລີ້ມຫ້ອງຮຽນດ້ວຍການອ້ອນວອນຂອບພຣະຄຸນແລະການທູນຂໍ. ໃຫ້ທວນຄືນເຖິງບົດຮຽນຫລັງວ່າພວກເຂົາເອົາຫຍັງແດ່ມາປະກອບໃຊ້ໃນຊີວິດປະຈຳວັນ. ຜູ້ນຳຕ້ອງຈຳຄວາມສເນີຂອງສະມາຊິກ.

**13.** ບອກໃຫ້ສະມາຊິກໃນຫ້ອງຈັບຄູ່ກັນ ແລະບອກໃຫ້ແຕ່ລະຄູ່ແບ່ງປັນເຖິງຄວາມຕ້ອງການຂອງຄົນທີ່ເຂົາໄດ້ຮູ້ແລະປະສົບມາຈະເປັນ (ພັຍທັມມະຊາດ, ໄຟໄໝ້, ວ່າງງານ, ການຕາຍ, ການຢ່າຮ້າງ, ເຈັບປວດ, ຫລືອຶດຫິວ...). ຂໍຮ້ອງໃຫ້ສະມາຊິກແບ່ງປັນຕໍ່ທຸກຄົນໃນຫ້ອງຟັງ.

**14.** ບອກວ່າວັນນີ້ພວກເຂົາຈະໄດ້ຮຽນເຖິງວິທີຄຣິສຕະຈັກສມັຍເດີມໄດ້ເຮັດຢ່າງໃດຕໍ່ຄວາມຕ້ອງການຂອງຄົນ. ບອກວ່າວັນນີ້ມີຜູ້ຊ່ວຍສອງຄົນຈະມາເພີ້ມຄວາມເຂົ້າໃຈເຖິງວິທີຊ່ວຍຄົນທີ່ມີຄວາມຕ້ອງການ.

**15.** ບອກໃຫ້ຜູ້ຊ່ວຍທີນຶ່ງອ່ານ ກິຈການ **6:1-4.** ຜູ້ຊ່ວຍຈະອະທິບາຍເຖິງຄວາມແຕກຕ່າງຂອງຄົນຢິວສອງກຸ່ມ.

**16.** ສລູບພຣະຄັມພີ ກິຈການ **6:8-8:1;11-19-26** ບອກໃຫ້ສະມາຊິກເຂົ້າໃຈເຖິງຄຣິສະຕຽນໃນເມືອງອັນຕີໂອເຂັຽ.

**17.** ບອກໃຫ້ຜູ້ຊ່ວຍທີສອງອ່ານ ແລະສລູບກິຈການ **11:27-30.** ໃຫ້ອະທິບາຍເຖິງວິທີຄຣິສຕະຈັກສມັຍນັ້ນຊ່ວຍຄົນຍາກຈົນຢ່າງໃດ.

**18.** ຂອບໃຈນຳຜູ້ຊ່ວຍທີ່ເອົາໃຈໃສ່ ບອກໃຫ້ທຸກຄົນຂອບໃຈນຳເຂົາ.

**19.** ບອກໃຫ້ຫ້ອງຮຽນອ້ອນວອນເພື່ອຄວາມຕ້ອງການຂອງຜູ້ຍາກຈົນ.

**20.** ອ້ອນວອນປິດ.

*ດຣ. ບຸນ ວົງສຸຣິດທ໌*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 6

# ຍອມຮັບຄຳທ້າທາຍເພາະເຫັນອົງພຣະເຢຊູ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ **6:8-7:5, 9-28, 35-41, 44-60**

**ພູມຫລັງຂອງພຣະຄັມພີ:** ກິຈການ **6:8-7:60**

**ຈຸດສຳຄັນສຳລັບບົດນີ້:** ຊະເຕຟາໂນຍອມຮັບເອົາຄຳທ້າທາຍ ແລະຍຶດໝັ້ນໃນອົງພຣະເຢຊູຜູ້ລາວປະກາດ.

**ຄຳຖາມເພື່ອການຄົ້ນຄວ້າ:** ມີການທ້າທາຍແລະສິ່ງອັນໃດເປັນເຫດໃຫ້ພວກເຮົາບໍ່ປະກາດເຣື່ອງຂອງອົງພຣະເຢຊູຕໍ່ທຸກໆຄົນ**?**

**ຈຸດປະສົງຂອງບົດຮຽນນີ້:** ເພື່ອໃຫ້ຮູ້ເຖິງການທ້າທາຍແລະສິ່ງອື່ນໆ ທີ່ເຮັດໃຫ້ພວກເຮົາບໍ່ປະກາດເຣື່ອງຂອງພຣະເຢຊູຕໍ່ທຸກໆຄົນ.

## ບົດນຳ

ຄຣິສຕະຈັກທີ່ເກີດໃໝ່ໃນກຸງເຢຣູຊາເລັມໃນວັນເພັນເຕຄໍສະເຕ ໃນສອງສາມມື້ກ່ອນນັ້ນເປັນວັນທີ່ເຕັມໄປດ້ວຍຄວາມຊົມຊື່ນຍິນດີ ແລະກໍມີການປ່ຽນແປງເກີດຂຶ້ນ. ພວກເຂົາຫວັງວ່າການປ່ຽນແປງນັ້ນຈະແຜ່ທົ່ວໄປໃນກຸງເຢຣູຊາເລັມ, ແຂວງຢູດາ, ຊາມາເຣັຽ, ແລະທົ່ວທຸກບ່ອນ. ນັ້ນເປັນພຣະດຳຣັດສັ່ງຂອງອົງພຣະເຢຊູໃຫ້ພວກສາວົກໄດ້ເຮັດໄປເຖິງທີ່ສຸດປາຍແຜ່ນດິນໂລກ ຊຶ່ງເລີ້ມຈາກກຸງເຢຣູຊາເລັມ **(**ກຈກ. **1:8).** ແລະພຣະດຳຣັດສັ່ງນັ້ນກໍກາຍເປັນຈິງ. ແຕ່ຜູ້ເຄີຍມີອຳນາດມາກ່ອນກໍບໍ່ພໍໃຈເລີຍຕໍ່ຕ້ານຕໍ່ການປ່ຽນແປງອັນໃໝ່ນັ້ນ. ການເລີ້ມຕົ້ນຂົ່ມເຫັງເກີດຂຶ້ນກັບຊະເຕຟາໂນ. ຄຣິສຕະຈັກເຫັນວ່າການປ່ຽນແປງນັ້ນເປັນສິ່ງຍາກແລະຕ້ອງມີການເສັຽສະລະອັນໃຫຍ່.

ຊະເຕຟາໂນເປັນຊາຍໜຸ່ມມີຄວາມເຊື່ອໃນພຣະເຢຊູຄຣິດດີ. ແຕ່ເຫັນວ່າພວກເຮົາບໍ່ຮູ້ຊີວິດຂອງລາວກ່ອນມາຮູ້ຈັກກັບອົງພຣະເຢຊູເປັນແນວໃດ. ລາວອາດເປັນຄົນນຶ່ງທີ່ມາເຊື່ອໃນວັນແຫ່ງເພັນເຕຄໍສະເຕຫລືລາວອາດເປັນສາວົກຄົນນຶ່ງໃນຫ້ອງຊັ້ນເທິງ **(**ກຈກ **1:12-15).** ເຣື່ອງຂອງລາວໄດ້ເກີດຂຶ້ນສັ້ນໆແລະແຈ່ມແຈ້ງດີ, ແລະລາວກໍໄດ້ພົບກັບການຂົ່ມເຫັງຄືຖືກຂ້າໃຫ້ຕາຍເພາະຄວາມເຊື່ອ.

ພວກເຮົາໄດ້ພົບກັບຊະເຕຟາໂນໃນບົດກ່ອນ ລາວໄດ້ຖືກເລືອກໃຫ້ເປັນຜູ້ຮັບໃຊ້ແຈກຢາຍອາຫານແກ່ພວກຜູ້ຍິງໝ້າຍຂອງພວກກຣີກ. ພຣະຄັມພີໄດ້ກ່າວວ່າລາວເປັນຄົນເຕັມໄປດ້ວຍຄວາມເຊື່ອແລະອົງພຣະວິນຍານບໍຣິສຸດ **(6:5).** ການທີ່ເຕັມໄປນັ້ນແມ່ນການຕຽມພ້ອມໃນພາຣະກິດທີ່ມີຢູ່ພາຍໜ້າ. ເມື່ອອົງພຣະວິນຍານນຳພາລາວກໍເຊື່ອຟັງ. ຊະເຕຟາໂຕມີຄວາມເຊື່ອດີ ແລະພວກເຮົາຄວນເອົາລາວເປັນຕົວຢ່າງໃນບົດຮຽນນີ້ຄືເຊື່ອຕ້ອງມີການປະຕິບັດ. ຄວາມເຊື່ອນັ້ນແມ່ນການໄວ້ວາງໃຈຊຶ່ງກົງກັນຂ້າມກັບການກ່າວວ່າຕົນເອງເຊື່ອໃນສມອງແລະປາກເທົ່ານັ້ນ.

## ແນະນຳການສອນ

**ແຜນການສອນ-ວິທີການສອນນັ້ນອາດສາມາດໃຊ້ແຕກຕ່າງກັນ**

**21.** ໃນບົດຮຽນນີ້ໃຫ້ຫລິ້ນລະຄອນກ້ອມເຣື່ອງຊະເຕຟາໂນເວົ້າຄຳພະຍານເຖິງຄວາມເຊື່ອ ທີ່ລາວມີໃນອົງພຣະພຣະຢຊູໃນກິຈການ **6:1-15.** ຖ້າຢາກໃຫ້ມີພະລັງໃຫ້ພາກັນນຸ່ງເຄື່ອງໃນສມັຍສັຕະວັດທີນຶ່ງ**.**

**22.** ຮ້ອງຂໍໃຫ້ຄົນນຶ່ງຄົນໃດອ່ານ ກິຈການ **6:1-15** ອອກສຽງດັງ**.** ແບ່ງຫ້ອງຮຽນເປັນສອງສາມກຸ່ມສຸດແລ້ວແຕ່ຈຳນວນຂອງສະມາຊິກ ແລະບອກໃຫ້ແຕ່ລະກຸ່ມເວົ້າເຣື່ອງການຮັບໃຊ້ຂອງຊະເຕຟາໂນ**.** ຕັ້ງຄຳຖາມວ່າຊີວິດແລະການຮັບໃຊ້ຂອງຊະເຕຟາໂນສອນຫຍັງແດ່ເຖິງເຣື່ອງພຣະເຈົ້າ**?** ຊີວິດຂອງຊະເຕຟາໂນສອນພວກເຮົາເຖິງຊີວິດຮັບໃຊ້ຢ່າງໃດ**?** ໃຫ້ເວລາແຕ່ລະກຸ່ມຊອກຫາຄຳຕອບ ແລະລາຍງານໃຫ້ທຸກຄົນໄດ້ຟັງ**.**

**23.** ຕັ້ງຄຳຖາມວ່າ ໃຫ້ທ່ານອະທິບາຍເຖິງຜູ້ກ່າວໂທດໃສ່ຊະເຕຟາໂນເຖິງເຣື່ອງໃດ**?** ໃຫ້ເວລາແຕ່ລະກຸ່ມລາຍງານສິ່ງທີ່ພວກເຂົາຄົ້ນພົບ**.**

**24.** ຂໍຮ້ອງໃຫ້ຜູ້ໃດຜູ້ນຶ່ງອ່ານ ກິຈການ **7:1-5, 9-28.** ຂໍຮ້ອງໃຫ້ອີກຄົນນຶ່ງອ່ານກິຈການ **7:35-41** ແລະໃຫ້ອີກຄົນນຶ່ງອ່ານ **7:44-60.**

**25.** ບອກໃຫ້ສະມາຊິກສົນທະນາກັນເຖິງເຣື່ອງຄຳປາສັຍ ແລະຜົນໄດ້ຮັບຂອງຊະເຕຟາໂນ**.** ຕັ້ງຄຳຖາມວ່າຊະເຕຟາໂນເວົ້າຫຍັງ ແລະລາວໄດ້ຮັບຜົນຕອບແທນຢ່າງໃດໃນການສອນເຮົາເຖິງເຣື່ອງພຣະເຈົ້າ ສອນເຣື່ອງຄົນແລະເຣື່ອງຊີວິດຢ່າງໃດ**?**

*ດຣ. ບຸນ ວົງສຸຣິດທ໌*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 7

# <u>ພຣະວິນຍານນຳພາການປະກາດຂ່າວປະເສີດ</u>

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ **8:26-40**

**ພູມຫລັງຂອງພຣະຄັມພີ:** ກິຈການ **8:4-42**

**ຈຸດສຳຄັນສຳລັບບົດນີ້:** ໃຫ້ພຣະວິນຍານນຳພາ**,** ຟີລິບບອກທຸກຄົນທີ່ຖາມເຖິງຂ່າວປະເສີດເຣື່ອງອົງພຣະເຢຊູ**.**

**ຄຳຖາມເພື່ອການຄົ້ນຄວ້າ:** ເຮັດແນວໃດພວກເຮົາຈຶ່ງມີຄວາມຮູ້ສຶກທີ່ຈະໃຫ້ອົງພຣະວິນຍານນຳພາໃນການແບ່ງປັນຂ່າວປະເສີດ**?**

**ຈຸດປະສົງຂອງບົດຮຽນນີ້:** ຊອກຫາທາງເພື່ອເຮັດໃຫ້ມີຄວາມຮູ້ສຶກທີ່ຈະໃຫ້ອົງພຣະວິນຍານນຳພາໃນການແບ່ງປັນຂ່າວປະເສີດ**.**

## ບົດນຳ

ຂັ້ນທີນຶ່ງທີ່ຈະກໍ່ຕັ້ງຄຣິສຕະຈັກຕ້ອງມີຜູ້ມີຄວາມເຊື່ອໃນກຸງເຢຣູຊາເລັມເປັນກຸ່ມໃຫຍ່ **(**ກຈກ **1-6).** ຂັ້ນທີສອງຄືໃຫ້ຜູ້ທີ່ເຊື່ອເປັນພະຍານເຖິງເຣື່ອງຂອງອົງພຣະຄຣິດໃນແຂວງຢູດາ ແຂວງຊາມາເຣັຽ ແລະທີ່ສຸດປາຍແຜ່ນດິນໂລກ **(**ກຈກ **1:8).** ພຣະເຈົ້າໄດ້ອວຍພຣະພອນໃຫ້ມີຄົນມາເຊື່ອໃນກຸງເຢຣູຊາເລັມໂດຍການຖືກຂົ່ມເຫັງ ພຣະເຈົ້າໄດ້ໃຊ້ຊີວິດຂອງຊະເຕຟາໂນ ຟີລິບ ແລະຄົນອື່ນໆ**.**

ຊະເຕຟາໂນ ແລະຟີລິບບໍ່ໄດ້ແມ່ນພວກອັຄສາວົກຂອງອົງພຣະຄຣິດໃນຈຳນວນສິບສອງຄົນເດີມນັ້ນ**.** ແຕ່ພວກເຂົາໄດ້ເປັນພາກສ່ວນຂອງເຈັດຄົນທີ່ເລືອກມາຮັບໃຊ້ໃນຄຣິສຕະຈັກໃນກຸງເຢຣູຊາເລັມ ເພື່ອໃຫ້ພວກອັຄສາວົກມີເວລາເອົາໃຈໃສ່ຕໍ່ການໄຫວ້ວອນແລະເທສນາ **(**ກຈກ **6).** ຄົນເຈັດຄົນນີ້ເປັນຄົນສລາດ ແລະເຕັມໄປດ້ວຍພຣະວິນຍານບໍຣິສຸດ. ທັງສອງຄົນນີ້ເປັນນັກເທສນາພິເສດເຣື່ອງຂ່າວປະເສີດຂອງອົງພຣະເຢຊູຄຣິດ**.**

ການຂົ່ມເຫັງເກີດຂຶ້ນເລີ້ມມາຈາກຄົນຫາເຣື່ອງວ່າຊະເຕຟາໂນໄດ້ສອນຜິດ **(6:11-14).** ຊະເຕຟາໂນໄດ້ຕອບໂຕ້ການຫາເຣື່ອງດ້ວຍການເວົ້າຄຳພະຍານເຖິງອົງພຣະເຢຊູຢ່າງມີພະລັງ ແຕ່ເຫັນວ່າຄຳພະຍານຂອງເຂົາໄດ້ຖືກປ່ຽນແປງຈົນເປັນເຫດໃຫ້ຊະເຕຟາໂນຖືກຄວ່າງກ້ອນຫີນໃສ່ຈົນຕາຍ. ບ່ອນຊະເຕຟາໂນຖືກຂ້າໃຫ້ຕາຍນັ້ນມີຊາຍໜຸ່ມຜູ້ມີຊື່ວ່າ ໂຊໂລ ຜູ້ກາຍເປັນຄົນຂົ່ມເຫັງຄົນຂອງພຣະເຈົ້າຢ່າງໜັກ **(8:1-3); 9:1).** ຕໍ່ມາໂຊໂລກໍກາຍເປັນອັຄສາວົກໂປໂລ**.**

ຫລັງຈາກຊະເຕຟາໂນຕາຍຄຣິສະຕຽນເປັນຈຳນວນຫລາຍໄດ້ຖືກຂົ່ມເຫັງແລະຖືກໄລ່ອອກຈາກກຸງເຢຣູຊາເລັມເຖິງປານນັ້ນພວກຄຣິສະຕຽນບໍ່ຍອມມິດງຽບ**.** ຄົນນຶ່ງທີ່ບໍ່ຍອມມິດນັ້ນກໍແມ່ນຟີລິບຜູ້ຍອມໃຫ້ພຣະເຈົ້າໃຊ້ໃນການເປັນພະຍານເຖິງຊີວິດມີການປ່ຽນແປງອັນໃຫຍ່ເກີດຂຶ້ນເພາະອົງພຣະເຢຊູຄຣິດ**.**

ທີ່ແລກຟີລິບໄດ້ເທສນາຕໍ່ຄົນຊາມາເຣັຽຊຶ່ງເປັນຜົນບໍ່ຄອຍດີຕາມທຳນຽມພວກຢິວ. ເປັນເວລາຫລາຍສັດຕະວັດພວກຢິວແລະພວກຊາມາເຣັຽບໍ່ຢາກພົບປະສັງສັນກັນ. ເມືອງຊາມາເຣັຽຊຶ່ງຕັ້ງຢູ່ລະຫວ່າງເມືອງຄາເລລີແລະເມືອງຢູດາ. ເມືອງນີ້ເຄີຍຂຶ້ນກັບອານາຈັກເໜືອຂອງພວກອິສຣາເອນຈົນເຖິງພວກອັສຊີເຣັຽມາຢຶດເອົາໃນປີ **721** ກຄສ. ປະຊາຊົນສ່ວນຫລາຍໄດ້ຖືກຈັບໄປເປັນຊະເລີຍ. ດັ່ງນັ້ນ, ເມືອງນີ້ຈຶ່ງມີຄົນຕ່າງຊາດມາອາສັຍຢູ່ໃນເວລາຕໍ່ມາ. ນັ້ນຈຶ່ງເປັນເຫດໃຫ້ພວກຢິວບໍ່ຍ່າງຜ່ານເມືອງຊາມາເຣັຽເປັນເດັດຂາດ ພວກເຂົາເຫັນວ່າຄົນໃນເມືອງນີ້ເປັນຄົນຢູ່ນອກຄວາມຮັກຂອງພຣະເຈົ້າ.

ເມື່ອຟີລິບໄດ້ຮັບຂ່າວວ່າຄົນໃນເມືອງນີ້ໄດ້ຮັບເອົາຂ່າວປະເສີດ, ພວກອັຄສາວົກຈາກກຸງເຢຣູຊາເລັມຈຶ່ງສົ່ງເປໂຕແລະໂຢຮັນໄປສືບສວນເບິ່ງວ່າເປັນຄວາມຈິງແທ້ບໍ່ (ກຈກ **8:14-17**). ເຖິງຢ່າງໃດກໍຕາມຄວາມຮັກຂອງພຣະເຈົ້າຍັງມີຕໍ່ຄົນໄທເມືອງຊາມາເຣັຽຢູ່. ຂ່າວປະເສີດໄດ້ແຜ່ອອກໄປເຖິງຄົນໃນທະວີບໃໝ່ເພາະຟີລິບໄດ້ຍອມໃຫ້ອົງພຣະວິນຍານເປັນຜູ້ນຳພາ ແລະລາວເອງກໍມີຄວາມຍິນດີຈະອອກໄປ.

## ແນະນຳການສອນ

### ແຜນການສອນ-ວິທີການສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

**26.** ສຶກສາເຖິງເຣື່ອງຊີວິດປະວັດຂອງຟີລິບໂດຍແບ່ງຫ້ອງຮຽນເປັນສາມກຸ່ມໃຫ້ພາກັນຄົ້ນຄວ້າ. ຂຽນສິ່ງທີ່ຈະເຮັດໃຫ້ແຕ່ລະທີມຮູ້. ໃຫ້ເວລາປະມານ **5** ນາທີເພື່ອໃຫ້ແຕ່ລະທີມລາຍງານສິ່ງໄດ້ຄົ້ນພົບ.

- ທີມທີ **1:** ສຶກສາ ກຈກ **6:1-7,** ໃຫ້ບອກເຖິງຄຸນສົມບັດຂອງຟີລິບວ່າເປັນດ້ວຍເຫດໃດລາວຈຶ່ງໄດ້ຖືກເລືອກເຂົ້າໃນຈຳນວນເຈັດຄົນເພື່ອຮັບໃຊ້.
- ທີມທີ **2:** ສຶກສາ ກຈກ **8:1, 4-7,** ໃຫ້ສລູບເຖິງຟີລິບທີ່ລາວໄດ້ເປັນພະຍານໃນເມືອງຊາມາເຣັຽ.
- ທີມທີ **3:** ສຶກສາ ກຈກ **21:7-9,** ບອກເຖິງຊີວິດຟີລິບຊາວປີຕໍ່ມາເວລາອາຈານໂປໂລໄປພົບລາວເວລາເດີນທາງໄປກຸງໂຣມໃນການປະກາດຄັ້ງທີສາມ.

ບອກໃຫ້ແຕ່ລະທີມມາລາຍງານເຖິງເຣື່ອງດັ່ງຕໍ່ໄປນີ້:

- ຟີລິບໄດ້ເຕັມໄປດ້ວຍອົງພຣະວິນຍານບໍຣິສຸດ ແລະຍອມໃຫ້ພຣະວິນຍານນຳພາ.
- ໃນເມື່ອມີການຂົ່ມເຫັງໃນກຸງເຢຣູຊາເລັມ ຟີລິບໄດ້ນຳເອົາຂ່າວປະເສີດໄປຍັງເມືອງຊາມາເຣັຽ.
- ບ່ອນໃດທີ່ຟີລິບໄປລາວກໍໄດ້ຮັບຄວາມສຳເຣັດໃນການປະກາດ.
- ຟີລິບໄດ້ອາສັຍຢູ່ເມືອງນາຊາເຣັດ ແລະໃຫຍ່ຂຶ້ນໃນຄອບຄົວທີ່ເຊື່ອໃນພຣະເຈົ້າ.

**27.** ນຳພາໂດຍການອ່ານກິຈການ **8:26-31,** ບອກໃຫ້ຄົນນຶ່ງທ່ອງຈຳ **(8:26, 29)**; ໃຫ້ອີກຄົນນຶ່ງອ່ານ **(8:30)**; ອີກຄົນນຶ່ງອ່ານ **(8:31)**. ຫລັງຈາກອ່ານແລ້ວຕັ້ງຄຳຖາມວ່າ, ເຮັດແນວໃດຄົນເຮົາຈຶ່ງຮູ້ສຶກວ່າອົງພຣະວິນຍານເປັນຜູ້ນຳໃນຊີວິດເໝືອນດັ່ງຟີລິບ?

**28.** ອະທິບາຍສັ້ນໆເຖິງເຣື່ອງໄທເມືອງເອທິໂອເປັຽ.

**29.** ໃຫ້ຄົນນຶ່ງອ່ານ ກຈກ **8:32-35** ແລະຕັ້ງຄໍາຖາມດັ່ງຕໍ່ໄປນີ້:

- ເປັນຫຍັງຈຶ່ງເປັນການສໍາຄັນ ຖ້າຮູ້ພຣະຄັມພີເພື່ອປະກອບໃຊ້ໃນການເປັນພະຍານ**?**
- ວິທີໃດຟີລິບໃຊ້ເຣື່ອງຂອງອົງພຣະເຢຊູໃນການເປັນພະຍານ**?**
- ທ່ານຄຶດວ່າແມ່ນຫຍັງເປັນກໍາແພງໃນການເປັນພະຍານຕໍ່ຄົນເມືອງເອທິໂອເປັຽເວລາຂີ່ຣົດມາ**? (**ໃຫ້ບອກສຖານທີ່**,** ພາສາ**,** ວັທນະທັມ**,** ສາສນານາ**,** ສັງຄົມ**)**

*ດຣ. ບຸນ ວົງສຸຣິດທ໌*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 8

# ຢ່າເບິ່ງຂ້າມກໍຣະນີທີ່ຍາກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ **9: 1-22, 26-28**

**ພູມຫລັງຂອງພຣະຄັມພີ:** ກິຈການ **9: 1-28**

**ຈຸດສຳຄັນສຳລັບບົດຮຽນນີ້:** ໂປໂລຜູ້ເຄີຍເປັນສັດຕຣູນຳເບີນຶ່ງຂອງຄຣິສຕຽນ ໄດ້ກັບກາຍມາເປັນຜູ້ປະກາດພຣະຄຣິດຜູ້ຍິ່ງໃຫຍ່ໂດຍການຊ່ວຍເຫລືອຂອງອານາເນັຽ ແລະບາຣະນາບາ.

**ຄຳຖາມເພື່ອຄົ້ນຄວ້າ:** ມີຜູ້ໃດແດ່ທີ່ທ່ານຮູ້ຈັກ ແລະໄດ້ເວົ້າສເມີວ່າຄົນຜູ້ນັ້ນຄົງຈະບໍ່ມີວັນທີ່ຈະມາເປັນຄຣິສຕຽນ**?**

**ຈຸດປະສົງຂອງບົດຮຽນນີ້:** ເພື່ອເບິ່ງວ່າພຣະເຈົ້າຈະຊົງໃຊ້ຂ້ອຍວິທີໃດ ເພື່ອອອກໄປຫາຜູ້ທີ່ຂ້ອຍເຄີຍຄິດວ່າຄົງບໍ່ມີວັນທີ່ຈະມາເປັນຄຣິສຕຽນ**?**

## ແຜນສຳລັບການສອນ

## ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

**1.** ເລີ້ມບົດຮຽນມື້ນີ້ດ້ວຍຄຳຖາມດັ່ງນີ້: ທ່ານອ້ອນວອນເພື່ອຄົນອື່ນໆບໍ່**?** ທ່ານລໍຖ້າໃຫ້ຄົນອື່ນມາຫາທ່ານ ຫລືທ່ານເປັນຜູ້ໄປຫາເຂົາເຈົ້າກ່ອນ**?** ທ່ານເຄີຍເປັນພຍານເຣື່ອງຄວາມເຊື່ອຂອງທ່ານບໍ່**?** ທ່ານຄິດວ່າຈະເຮັດຫຍັງແດ່ເພື່ອນຳຄົນໄປສູ່ຄວາມພົ້ນ**?** ໃຫ້ເວລາຕອບແລະສົນທະນາຫ້ານາທີ**.**

**2.** ເຣື່ອງການອອກໄປຫາຄົນທີ່ພວກເຮົາຄິດວ່າຄົງບໍ່ມີວັນທີຄົນພວກນັ້ນຈະມາເປັນຄຣິສຕຽນ**.** ໃຊ້ເວລາຕອບຄຳຖາມຕໍ່ໄປນີ້:

   **1)** ທ່ານເຄີບພົບຄົນທີ່ພຍາຍາມທຳລາຍຄຣິສຕຽນບໍ່**?**

   ____ຜູ້ກໍ່ການຮ້າຍ**?**

   ____ອົງກອນທີ່ມີຫົວຮຸນແຮງ**?**

   ____ອາຈານມະຫາວິທະຍາລັຍ**?**

   ____ເພື່ອນບ້ານຫລືເພື່ອນຮ່ວມງານ**?**

   **2)** ທ່ານຈະອ້ອນວອນແນວໃດສຳລັບບຸກຄົນທີ່ມີເຈຕນາທຳລາຍຄຣິສຕຽນ**?**

   ____ຂໍພຣະເຈົ້າໃຫ້ປົກປັກຮັກສາປະເທດອະເມຣິກາບໍ**?**

   ____ຂໍພຣະເຈົ້າໃຫ້ປົກປັກຮັກສາຄຣິສຕະຈັກບໍ**?**

   ____ຂໍພຣະເຈົ້າໃຫ້ໂຜດບຸກຄົນນັ້ນໆໂດຍພຣະຄຸນບໍ**?**

   ____ຂໍໃຫ້ພຣະເຈົ້າຊົງໃຊ້ທ່ານອອກໄປຊ່ວຍໃຫ້ເຂົາເຫລົ່ານັ້ນໄດ້ມາຫາພຣະອົງບໍ**?**

## ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

**3.** ທົບທວນເບິ່ງເຣື່ອງຂອງໂປໂລໃນ ກິຈການ **7:56-8:3** ແລະເບິ່ງບົດຮຽນໃນຫົວຂໍ້ **ì**ການກັບໃຈຂອງໂປໂລເປັນເຣື່ອງອັສຈັນ **(9: 1-8).î** ຫລັງຈາກນັ້ນຖາມຄວາມເຫັນຈາກນັກຮຽນເຖິງເຫດຜົນທີ່ວ່າທ່ານຈະຕ້ອງເປັນຜູ້ນຶ່ງທີ່ຄົນຄິດວ່າຄົງບໍ່ມີວັນທີ່ຈະມາເປັນຄຣິສຕຽນແລະເປັນຜູ້ຮັບໃຊ້ພຣະເຢຊູ.

**4.** ແບ່ງນັກຮຽນອອກເປັນສອງກຸ່ມ; ຂຽນຂໍ້ພຣະທັມທັງສອງຕອນທີ່ເລົ່າເຣື່ອງການກັບໃຈຂອງໂປໂລໃສ່ກະດານ ແລ້ວແບ່ງປັນໃຫ້ກຸ່ມລະຕອນເພື່ອໄປສຶກສາເບິ່ງ.

   1) ກິຈການ **22:1-11 --**ຄຳປ້ອງກັນຕົວຂອງໂປໂລ ຕອນຖືກຈັບທີ່ກຸງເຢຣູຊາເລັມ
   2) ກິຈການ **26: 9-19--**ການພິພາກສາໂປໂລໂດຍກະສັດອາຄຣິປາທີ່ກາຍຊາ

ອ່ານກິຈການ **9:1-9**ໃຫ້ທຸກຄົນຟັງເພື່ອນັກຮຽນຈະໄດ້ເຫັນສິ່ງທີ່ຄ້າຍຄືກັນ. ກຸ່ມທີ່ສຶກສາກິຈການ **22** ຈະໄດ້ຮູ້ຊີວິດຂອງໂປໂລກ່ອນທີ່ຈະມາເຊື່ອ; ກຸ່ມທີ່ສຶກສາກິຈການ **26** ຈະໄດ້ຮູ້ເຣື່ອງໂປໂລຂົ່ມເຫັງຄຣິສຕຽນ ແລະເຣື່ອງໂປໂລຖືກພຣະເຈົ້າຊົງເອີ້ນ.

**5.** ຕອນນີ້ຍັງຮັກສາກຸ່ມໄວ້ຢູ່; ໃຫ້ກຸ່ມທີນຶ່ງຄົ້ນຄວ້າເບິ່ງກິຈກັມຂອງອານາເນັຽໃນການກັບໃຈຂອງໂປໂລ (ກກ **9: 10-19)**; ໃຫ້ກຸ້ມທີສອງຄົ້ນຄວ້າເບິ່ງກິຈກັມຂອງບາຣະນາບາໃນການນຳໂປໂລເຂົ້າໄປຮ່ວມກັບຄຣິສຕະຈັກ (ກກ **9: 20-22,26-30).** ແບ່ງກະດານເປັນສອງພາກ; ພາກນຶ່ງຂຽນ **ì**ອານາເນັຽ**î** ເລະພາກທີສອງຂຽນ **ì**ບາຣະນາບາ.**î** ໃຫ້ຂຽນບຸຄະລິກຂອງແຕ່ລະຄົນໃສ່ກ້ອງຊື່ (ຕົວຢ່າງ: ຟັງພຣະເຈົ້າ, ເຊື່ອຟັງ, ພ້ອມທີ່ຈະສ່ຽງພັຍ, ເປັນອ້າຍລ້ຽງ, ເປັນເພື່ອນ, ໜຸນນ້ຳໃຈ, ເວົ້າແທນ).

## ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)

**6.** ຖາມ, ທ່ານຈົດຈຳເວລານາທີທີ່ພຣະເຢຊູໄດ້ຊົງເປີດເຜີຍພຣະອົງເອງໃຫ້ກັບທ່ານ ແລະທ່ານກໍໄດ້ຮັບເຊື່ອ ບໍ່? ທ່ານມີອ້າຍລ້ຽງເປັນຜູ້ດູແລແນະນຳບໍ່ໃນຕອນເຊື່ອໃໝ່? ໃຫ້ເວລາບາງຄົນເພື່ອເປັນພຍານ; ແນະນຳໃຫ້ທຸກຄົນຂຽນຄຳພຍານຂອງຕົນໄວ້ເພື່ອຈະໄດ້ໃຊ້ເວລາພຣະເຈົ້າຊົງເປີດທາງໃຫ້.

**7.** ໃຫ້ນັກຮຽນທຸກຄົນຂຽນຊື່ຜູ້ທີ່ເຂົາເຈົ້າຮູ້ວ່າຈະເປັນພຍານໄດ້ຍາກໃສ່ເຈັ້ຽໄວ້. ໜຸນໃຈນັກຮຽນວ່າ:

- ພຣະເຈົ້າຊົງສາມາດທີ່ຈະປ່ຽນແປງບຸກຄົນທີ່ເຮົາເຫັນວ່າຍາກຫລາຍທີ່ຈະມາເຊື່ອ.
- ອາດຈະມີບາງຄົນໃນລາຍຊື່ທີ່ທ່ານຂຽນໄວ້ ກາຍມາເປັນຄຣິສຕຽນແລະຜູ້ຮັບໃຊ້ຂອງພຣະເຢຊູຄຣິດ.

ອ້ອນວອນປິດການສຶກສາພຣະທັມໂດຍຂໍພຣະເຈົ້າໃຫ້ຊົງປ່ຽນແປງຈິດໃຈຂອງທຸກໆຄົນທີ່ມີຊື່ຢູ່ໃນລາຍການທີ່ນັກຮຽນທັງຫລາຍໄດ້ຂຽນໄວ້.

*ດຣ. ສົດນີ ຄານ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 9
# ຂ້າມກຳແພງເພື່ອອອກໄປຫາທຸກຄົນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ **11: 1-26**

**ພູມຫລັງຂອງພຣະຄັມພີ:** ກິຈການ **10:1-11:26**

**ຈຸດສຳຄັນສຳລັບບົດຮຽນນີ້:** ໂດຍການຊົງນຳຂອງພຣະວິນຍານຂອງພຣະເຈົ້າ ເປໂຕແລະຄຣິສຕະຈັກທີ່ອັນຕີໂອເຊັຽໄດ້ຂ້າມກຳແພງວັທນະທັມແລະສາສນາເພື່ອຈະອອກໄປຫາຄົນດ້ວຍຂ່າວປະເສີດ.

**ຄຳຖາມເພື່ອຄົ້ນຄວ້າ:** ທ່ານແລະຄຣິສຕະຈັກຈະຂ້າມ ຫລືທຳລາຍກຳແພງທີ່ກີດກັ້ນບໍ່ໃຫ້ທ່ານແລະຄຣິສຕະຈັກໄດ້ອອກໄປຫາຄົນທີ່ແຕກຕ່າງຈາກພວກທ່ານເອງດ້ວຍຂ່າວປະເສີດເຣື່ອງພຣະເຢຊູວິທີໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຮູ້ວ່າມີກຳແພງໃດແດ່ທີ່ພຣະເຈົ້າຊົງປາຖນາໃຫ້ຂ້າພະເຈົ້າຂ້າມເພື່ອຈະອອກໄປຫາຄົນອື່ນໆດ້ວຍຂ່າວປະເສີດ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

**1.** ເລີ້ມບົດຮຽນດ້ວຍການສົນທະນາ(ປະມານສາມນາທີ)ຄຳຖາມສອງຂໍ້ຕໍ່ໄປນີ້:
- ໃຫ້ເຫດຜົນວ່າເປັນຫຍັງຫລາຍຄົນໃນສມັຍນີ້ຕໍ່ຕ້ານຄວາມແຕກຕ່າງກັນຢູ່ໃນສະຫະຣັດ? (ຄຳຕອບອາດຈະແມ່ນ: ສັງຄົມສົງເຄາະແພງຫລາຍ, ຫລາຍພາສາແລະຫລາຍວັທນະທັມໂພດ; ຄົນບາງກຸ່ມຢາກຮັກສາອຳນາດ)
- ໃຫ້ເຫດຜົນວ່າເປັນຫຍັງພຣະເຈົ້າຊົງຮວມທຸກໆຄົນໃນໂຄງການໂຜດມະນຸດໃຫ້ພົ້ນຂອງພຣະອົງ? (ຄຳຕອບອາດຈະແມ່ນ: ທຸກຄົນສເມີພາບຕໍ່ພຣະພັກພຣະອົງ; ທຸກຄົນໄດ້ເຮັດບາບແລະຕ້ອງການຄວາມພົ້ນ; ພຣະເຈົ້າຊົງໃຫ້ອຳນາດກັບຄຣິສຕະຈັກເພື່ອເຮັດໜ້າທີ່)

**2.** ຫລັງຈາກນັ້ນບອກນັກຮຽນວ່າ ການຮັບຮູ້ຄວາມແຕກຕ່າງກັນເປັນເຣື່ອງຍາກສຳລັບບາງຄົນຊຶ່ງຮວມທັງຄຣິສຕຽນດ້ວຍ; ອ່ານຄຳຖາມເພື່ອຄົ້ນຄວ້າ ແລະຈຸດປະສົງຂອງບົດຮຽນນີ້.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

**3.** ໃຫ້ຜູ້ນຶ່ງອ່ານ ກິຈການ **11:1-3** ແລະໃຫ້ຄົນອື່ນໆຟັງເບິ່ງບັນຫາສອງຢ່າງທີ່ຄຣິສຕຽນຢິວໃນສມັຍທຳອິດຕ້ອງແກ້ໄຂ. ແບ່ງກະດານເປັນສອງພາກ; ພາກທີນຶ່ງຂຽນຫົວຂໍ້ວ່າ ìຄວາມແຕກຕ່າງໃນຄຣິສຕະຈັກສມັຍທຳອິດ.î **(1)** ຄົນຕ່າງຊາດເປັນຄຣິສຕຽນໄດ້ບໍ່ ຖ້າບໍ່ເປັນຄົນຢິວກ່ອນ**?** **(2)** ຄົນຢິວທີ່ເປັນຄຣິສຕຽນສາມາດຮ່ວມໂຕະສາມັກຄີທັມກັບຄົນຕ່າງຊາດທີ່ເປັນຄຣິສຕຽນບໍ່**?** ໃຊ້ບົດຮຽນຊ່ວຍໃນການໃຫ້ເບື້ອງຫລັງຫົວຂໍ້ ìຄຳຖາມໃຫຍ່ສອງຂໍ້î **(11:1-3)**

**4.** ຖາມ**,** ມີຄວາມແຕກຕ່າງກັນແນວໃດແດ່ທີ່ເຮັດໃຫ້ມີການແຕກແຍກໃນຄຣິສຕະຈັກແລະໃນຄະນະໃນປັດຈຸບັນທີ່ມີສ່ວນຄ້າຍກັນກັບຄວາມຫ່ວງໃຍຂອງຄຣິສຕະຈັກໃນສມັຍທຳອິດ**?** ຂຽນຫົວຂໍ້ ì<u>ຄວາມແຕກຕ່າງໃນຄຣິສຕະຈັກໃນສມັຍນີ້</u>î ໃສ່ພາກທີສອງຂອງກະດານ**.**

**5.** ໃຫ້ທຸກຄົນຟັງລາຍງານໃນ ກິຈການ **11:4-16;** ໃຫ້ອີກຜູ້ນຶ່ງອ່ານຄຳໃຫ້ການຂອງເປໂຕທີ່ມີຢູ່ໃນບົດຮຽນກ້ອງຫົວຂໍ້ ìປະສົບການຂອງເປໂຕî <u>ທີ່ໄດ້ຖືກຂີດກ້ອງໄວ້</u>. ບອກວ່າທ່ານລູກາໄດ້ຂຽນເຣື່ອງນີ້ໄວ້ເຖິງສອງເທື່ອ**:** ກິຈການ **10** ແລະກິຈການ **11;** ຖາມ**:** ພວກທ່ານຄິດວ່າເຣື່ອງນີ້ສຳຄັນແນວໃດ**?**

**6.** ໃຫ້ຜູ້ນຶ່ງອ່ານກິຈການ **11:15-18** ໃນຂະນະທີ່ທຸກຄົນຟັງເບິ່ງການຊົງທຳງານຂອງພຣະວິນຍານບໍຣິສຸດໃນບ້ານຂອງໂກເນລີໂອ**.** ອ່ານເພີ້ມ ກິຈການ **10:19-20, 30-31, 44-45.** ສົນທະນາການທຳງານຂອງພຣະວິນຍານໃນການເຕົ້າໂຮມພວກຜູ້ເຊື່ອທັງຫລາຍໃນສມັຍນີ້**.**

**7.** ໃຫ້ຜູ້ນຶ່ງອ່ານກິຈການ **11:19-26** ແລະໃຫ້ທຸກຄົນສັງເກດເບິ່ງວ່າເປັນຫຍັງຄຣິສຕະຈັກທີ່ເມືອງອັນຕິໂອເຊັຽບໍ່ໄດ້ເສັຽເວລາໃນເຣື່ອງຄວາມແຕກຕ່າງກັນ**.** ໃຊ້ບົດຮຽນຫົວຂໍ້ ìສືບຕໍ່ຂ້າມກຳແພງ**.**î ຖາມ**,** <u>ຄຣິສຕະຈັກໃດມີຄວາມເຂົ້າໃຈພຣະຄຳຂອງພຣະເຢຊູໃນ ກິຈການ **1:8**</u>**?**

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

**8.** ກັບໄປເບິ່ງກະດານກ້ອງຫົວຂໍ້ ìຄວາມແຕກຕ່າງໃນຄຣິສຕະຈັກໃນສມັຍນີ້**.**î ພານັກຮຽນຄິດເບິ່ງວ່າມີຫຍັງແດ່ທີ່ເປັນບັນຫາໃຫ້ຄຣິສຕະຈັກຂອງພວກເຮົາທັງຫລາຍ**.** ມີຫຍັງແດ່ທີ່ພວກເຮົາສາມາດເຮັດໄດ້ເພື່ອຈະໃຫ້ມີການຄືນດີ**?**

**9.** ໃຫ້ໂອກາດບາງຄົນເພື່ອແບ່ງປັນປະສົບການຂອງເຂົາເຈົ້າໃນເຣື່ອງທີ່ໄດ້ສຶກສາກັນມາ **(**ຖືກຂົ່ມເຫັງເພາະຄວາມແຕກຕ່າງກັນ**).**

**10.** ອ້ອນວອນປິດການສຶກສາພຣະທັມ; ອະທິຖານເພື່ອບຸກຄົນທີ່ມີປັນຫາໃຫ້ຍອມຮັບຄວາມແຕກຕ່າງກັນໃນຄຣິສຕະຈັກແລະໃນສັງຄົມຂອງພວກເຮົາ**.**

*ດຣ. ສິດນີ ຄານ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 10
# ປັນພຍານເຣື່ອງພຣະເຢຊູນອກບ່ອນທີ່ທ່ານຢູ່

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ **13: 1-5, 13-14, 42-52**

**ພູມຫລັງຂອງພຣະຄັມພີ:** ກິຈການ **13**

**ຈຸດສຳຄັນສຳລັບບົດຮຽນນີ້:** ຄຣິສຕະຈັກທີ່ອັນຕີໂອເຊັຽເຊື່ອຟັງພຣະວິນຍານທີ່ຊົງບອກໃຫ້ສົ່ງຜູ້ປະກາດຂ່າວປະເສີດອອກໄປ, ແລະບາຣະນາບາແລະໂປໂລກໍໄດ້ອອກໄປຢ່າງກ້າຫານ, ປະກາດພຣະເຢຊູກັບຄົນຢິວ ແລະຄົນຕ່າງຊາດ.

**ຄຳຖາມເພື່ອຄົ້ນຄວ້າ:** ພວກເຮົາເປັນຢ່າງໃດເຣື່ອງການສົ່ງຜູ້ປະກາດຂ່າວປະເສີດອອກໄປ? ທ່ານພ້ອມທີ່ຈະໄປ ຫລືຈະສົ່ງບໍ່?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອສຳຣວດເບິ່ງການພົວພັນຂອງຂ້ອຍເຣື່ອງພັນທະກິດ, ບໍ່ວ່າຈະແມ່ນການສົ່ງ ຫລືການໄປ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ກ່ອນມື້ຮຽນໃຫ້ຕິດໂປສເຕີສີ່ແຜ່ນໃສ່ຝາໄວ້; ແຕ່ລະໃບໃຫ້ຂຽນຫົວຂໍ້ໃສ່ດັ່ງຕໍ່ໄປນີ້: **1.**ເຢຣູຊາເລັມ: ບ່ອນຄຸ້ນເຄີຍ, **2.** ຢູດາຍ: ບ່ອນໃກ້ຄຽງ, **3.** ຊາມາເຣັຽ: ບ່ອນບໍ່ມັກ, ແລະ ທີ່ປາຍສຸດແຜ່ນດິນ: ແດນໄກ. ຕຽມມາກເກີ້ໄວ້ຫລາຍອັນ ເພື່ອໃຫ້ນັກຮຽນຫລາຍຄົນໄດ້ອອກໄປຂຽນພ້ອມໆກັນ.
2. ອ່ານກິຈການ **1:8** ໃຫ້ທຸກຄົນໄດ້ຟັງ. ອະທິບາຍບ່ອນທີ່ພຣະທັມກ່າວເຖິງ: **1.**ເຢຣູຊາເລັມ: ບໍ່ຄຸ້ນເຄີຍ, **2.** ຢູດາຍ: ບ່ອນໃກ້ຄຽງ, **3.** ຊາມາເຣັຽ: ບ່ອນບໍ່ມັກ, ແລະ ທີ່ປາຍສຸດແຜ່ນດິນ: ແດນໄກ.
3. ໃຊ້ເວລາຫ້ານາທີເພື່ອໃຫ້ນັກຮຽນອອກໄປຂຽນວ່າເຢຣູຊາເລັມ, ຢູດາຍ, ຊາມາເຣັຍ, ແລະທີ່ປາຍສຸດແຜ່ນດິນ ຂອງພວກເຂົາເຈົ້າວ່າແມ່ນບ່ອນໃດແດ່; ຕົວຢ່າງ: ເຢຣູຊາເລັມແມ່ນຄຸ້ມບ້ານ, ບ່ອນເຮັດການ, ຫລືເດີ່ນກິລາ.
4. ນຳພານັກຮຽນອ້ອນວອນ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

5. ອ່ານກິຈການ **1: 8** ອີກເທື່ອນຶ່ງ; ບອກວ່າໃນກິຈການ **13,** ຜູ້ປະກາດຂ່າວປະເສີດໄດ້ເຮັດຕາມພຣະບັນຊາຂອງພຣະເຢຊູໂດຍການອອກຈາກບ່ອນທີ່ຄຸ້ນເຄີຍໄປເຖິງແດນໄກເພື່ອເປັນພຍານ.

6. ຖາມ, ການເປັນພຍານແປວ່າຫຍັງ? ການເປັນພຍານເຣື່ອງພຣະເຢຊູມີຄວາມໝາຍແນວໃດ? ທ່ານມາເປັນພຍານຂອງພຣະເຢຊູໄດ້ວິທີໃດ?

7. ໃຫ້ຜູ້ນຶ່ງອ່ານກິຈການ 13:1-5; ອະທິບາຍບົດຮຽນໃນຫົວຂໍ້ ìພຣະເຈົ້າຊົງມີແຜນສເມີ;î ເລົ່າເບື້ອງຫລັງຂອງຄຣິສຕະຈັກ; ເວົ້າເຣື່ອງການຕອບການຊົງເອີ້ນຂອງພຣະວິນຍານຂອງໂປໂລແລະບາຣະນາບາ ແລະຄຣິສຕະຈັກເວລາເຂົາເຈົ້າໄດ້ສົ່ງຜູ້ປະກາດຂ່າວປະເສີດອອກໄປ. ບອກວ່າເກາະກຸບໂຣແມ່ນເຢຣູຊາເລັມສຳລັບບາຣະນາບາເພາະທ່ານມາຈາກທີ່ນັ້ນ. ຜູ້ປະກາດຂ່າວປະເສີດກຸ່ມນີ້ໄດ້ອອກໄປຫາຊາວຢິວ ທີ່ພວກເຂົາເຈົ້າຮູ້ກ່ອນ.

8. ໃຫ້ຜູ້ນຶ່ງອ່ານ ກິຈການ 13:13-14; 42-45; ອະທິບາຍບົດຮຽນໃນຫົວຂໍ້ ìການອຸທິດຕົນ, ຫລັກຄວາມເຊື່ອ, ແລະເຫດຜົນ.î ແນະນຳວ່າໂປໂລກຳລັງອອກໄປຫາທັງຄົນຢິວແລະຄົນຕ່າງຊາດໃນຕອນນີ້. ບອກວ່າພວກເຮົາຈະຕ້ອງອອກໄປຫາບ່ອນທີ່ພວກເຮົາບໍ່ມັກດ້ວຍ. ບ່ອນໃດແດ່ທີ່ຖືວ່າເປັນບ່ອນບໍ່ມັກສຳລັບໂປໂລແລະຄະນະ?

9. ໃຫ້ຜູ້ນຶ່ງອ່ານກິຈການ 13:16-52; ແລະອະທິບາຍບົດຮຽນໃນຫົວຂໍ້ ìຂ້າມກຳແພງເພື່ອເປັນພຍານ.î ບອກວ່າໂລກມະນຸດເຕັມໄປດ້ວຍຄົນຕ່າງຊາດ ແລະການເປັນພຍານເຣື່ອງພຣະເຢຊູຈະຕ້ອງໃຫ້ໄປເຖິງຄົນທົ່ວໂລກ. ອ່ານຂໍ້ 47 ອີກເທື່ອນຶ່ງ.

10. ສລຸບພາກ ìການຕອບຮັບຂອງພວກເຮົາî ໃນບົດຮຽນ. ຖາມ: ພວກເຮົາຈະແບ່ງປັນເຣື່ອງຂ່າວປະເສີດແນວໃດ? ຈະສົ່ງຄົນອອກໄປແນວໃດ? ພຣະວິນຍານຂອງພຣະເຈົ້າຊົງເອີ້ນພວກເຮົາໃຫ້ເຮັດຫຍັງແດ່ນອກຈາກນັ້ນ?

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

11. ເອົາເຈັ້ຽເປົ່າແລະສໍໃຫ້ນັກຮຽນທຸກຄົນ ແລ້ວໃຫ້ເຂົາເຈົ້າຂຽນຂໍ້ຄວາມຕໍ່ໄປນີ້ໃສ່:
    - ຜູ້ປະກາດຂ່າວປະເສີດ
    - ທົ່ງນາ
    - ພັນທະກິດ

12. ໃຫ້ເວລາເລັກນ້ອຍເພື່ອນັກຮຽນຈະໄດ້ອະທິບາຍຂໍ້ຄວາມເຫລົ່ານັ້ນ; ຫລັງຈາກຂຽນແລ້ວໃຫ້ນັກຮຽນປ່ຽນເຈັ້ຽກັນ; ໃຫ້ທຸກຄົນອ່ານເຈັ້ຽຢູ່ໃນມືຂອງໃຜລາວ.

13. ເບື້ອງຫລັງຂອງເຈັ້ຽໃຫ້ແຕ່ລະຄົນຂຽນວ່າ ເຢຣູຊາເລັມ, ຢູດາຍ, ຊາມາເຣັຍ, ແລະທີ່ປາຍສຸດແຜ່ນດິນຂອງພວກພວກເຂົາເຈົ້າແມ່ນບ່ອນໃດ. ໃຫ້ເວລາຄິດວ່າພວກເຂົາເຈົ້າຈະອອກໄປວິທີໃດ.

14. ອ່ານກິຈການ 1:8. ຊັກຊວນນັກຮຽນໃຫ້ເລີ້ມອອກໄປ, ສົ່ງຄົນອອກໄປ, ຫລືເຮັດທັງສອງຢ່າງທີ່ ເຢຣູຊາເລັມ, ຢູດາຍ, ຊາມາເຣັຽ, ແລະທີ່ປາຍສຸດແຜ່ນດິນ ຂອງພວກພວກເຂົາເຈົ້າ.

*ດຣ. ສິດນີ ຄານ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 11
# ໃສ່ໃຈໃນສິ່ງຈຳເປັນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ **15:1-29**

**ພູມຫລັງຂອງພຣະຄັມພີ:** ກິຈການ **15:1-35**

**ຈຸດສຳຄັນສຳລັບບົດຮຽນນີ້:** ຕ້ອງໃສ່ໃຈໃນພຣະເຢຊູແລະພຣະຄຸນຂອງພຣະອົງຫລາຍກວ່າຢ່າງອື່ນ

**ຄຳຖາມເພື່ອຄົ້ນຄວ້າ:** ເຮົາປ່ອຍໃຫ້ປະເພນີ ຫລື ການພິສູດເຂົ້າມາຂັດຂວາງພຣະຄຸນຍາມໃດ**?**

**ຈຸປສົງຂອງບົດຮຽນນີ້:** ບອກວ່າພຣະຄຸນທາງຄວາມເຊື່ອຍິ່ງໃຫຍ່ໄປກວ່າກົດຂອງມະນຸດ

## ຄຳນຳ

ຫລັງຈາກພຣະເຢຊູຊົງສະເດັດກັບຂຶ້ນຄືນເມືອສູ່ສວັນແລ້ວ ບັນດາສາວົກກໍເອົາໃຈໃສ່ນຳຂ່າວປະເສີດເຣື່ອງຄວາມລອດພົ້ນທີ່ມີຜ່ານທາງພຣະເຢຊູອອກໄປທຸກທົ່ນທຸກແຫ່ງໃນເຂດແດນຂອງຕົນຈົນໄປຮອດຊາວຕ່າງດ້າວ ແລະຊາວຕ່າງດ້າວກໍໄດ້ເຊື່ອແລະກັບໃຈດ້ວຍຄວາມຊົມຊື່ນຍິນດີ ແຕ່ເມື່ອຂ່າວນີ້ຊ່າລືໄປຮອດພວກນັກທັມຟາຣີຊາຍທີ່ຖືກົດຂອງໂມເຊຢ່າງເຄັ່ງຄັດຈຶ່ງສັ່ງໃຫ້ຊາວຕ່າງດ້າວທຸກຄົນໄດ້ເຮັດພິທີຕັດ ຈຶ່ງຈະຖືວ່າຄົບຖ້ວນຄວາມລອດພົ້ນ ເຣື່ອງນີ້ໄດ້ກາຍເປັນເຣື່ອງໃຫຍ່ຈົນມີກອງປະຊຸມຫລວງເກີດຂຶ້ນທີ່ກຸງເຢຣູຊາເລັມ**.**

## ການໂຕ້ຖຽງກັນ (ກິຈການ 15:1-5)

**1.** ຂໍ້ **1** ເຫັນແຈ້ງວ່າຄົນທີ່ມາຈາກແຂວງຢູດາຍ ແມ່ນຄົນໃນສາສນາຢິວ **(Judaism)** ໃຫ້ຊາວຕ່າງຊາດທີ່ມາເປັນຄຣິສຕຽນທຸກຄົນເຮັດພິທີຕັດຄືຊາວຢິວ**.**

**2.** ຂໍ້ **2-5** ໂປໂລກັບ ບາຣະນາບາ ມີຄຳເຫັນແຕກຕ່າງກັບຊາວຢູດາຍ ແລະຍັງເຫັນວ່າພວກເຂົາເອົາກົດຂອງມະນຸດມາເພີ້ມເຕີມຄວາມລອດພົ້ນທີ່ມາຈາກພຣະເຈົ້າ**.**

**3.** ເມື່ອເປັນເຊັ່ນນັ້ນພວກຜູ້ນຳໃນເມືອງອັນຕິໂອເຊັຽ ຈຶ່ງສົ່ງໂປໂລແລະບາຣະນາບາໃຫ້ໄປພົບກັບບັນດາຜູ້ອາວຸໂສທີ່ກຸງເຢຣູຊາເລັມເພື່ອຊອກຫາຊ່ອງທາງແກ້ໄຂ**.** ໃນຂະນະທີ່ເດີນທາງໄປເຢຣູຊາເລັມທັງສອງໄດ້ລົມກັນວ່າທັງສອງໄດ້ປະກາດພຣະນາມແຫ່ງພຣະເຢຊູຄຣິດແລ້ວພວກຕ່າງຊາດກໍຮັບເອົາ ແຕ່ເປັນຫຍັງຊາວຢູດາຈຶ່ງພະຍາມຍາມເຮັດໃຫ້ຊາວຕ່າງດ້າວເຫລົ່ານີ້ຍາກແທ້**,** ພວກເຂົາພະຍາຍາມເອົາກົດຂອງມະນຸດມາເພີ້ມໃຫ້ຊາວຕ່າງດ້າວແບກອີກ**.** ໂປໂລກັບບາຣະນາບາພໍຈະເຂົ້າໃຈວ່າຫາກຖືກກົດຂີ່ຂົ່ມເຫັງຈາກອຳນາດທາງຣາຊການ ຫລືຖືກຂົ່ມເຫັງຈາກບຸກຄົນທີ່ບໍ່ເຊື່ອພຣະເຈົ້າກໍເປັນຂອງທັມະດາ ແຕ່ນີ້ແມ່ນການຂົ່ມເຫັງຈາກຜູ້ມີອຳນາດຈາກຝ່າຍດຽວກັນ ຈຶ່ງເຮັດໃຫ້ທັງສອງຂັດເຄືອງໃຈເປັນຢ່າງຍິ່ງ**.**

**4.** ກອງປະຊຸມໄດ້ເປີດຂຶ້ນເມື່ອທ່ານທັງສອງໄປເຖິງກຸງເຢຣູຊາເລັມ, ແຕ່ນຶ່ງໃນພວກຟາຣີຊາຍໄດ້ກ່າວອີກວ່າ *ìຄົນຕ່າງຊາດນັ້ນຕ້ອງໃຫ້ເຂົາຮັບພິທີຕັດ ແລະສັ່ງໃຫ້ເຂົາຖືຮັກສາພຣະບັນຍັດຂອງໂມເຊî* (ຂໍ້ **5).**

## <u>ການແລກປ່ຽນຄວາມຄິດຄວາມເຫັນ</u> (ກິຈການ 15: 6-12)

**1.** ໃນຂໍ້ **6-11** ເປໂຕໄດ້ກ່າວສນັບສນູນໂປໂລແລະບາຣະນາບາ ອ່ານ **6-11**

**2.** ເປໂຕກໍໄດ້ປະກາດກັບຊາວຕ່າງດ້າວມາແລ້ວຄືກັນເຊັ່ນ: ນາຍຮ້ອຍໂກເນລີໂອຜູ້ບັນຊາການທະຫານອີຕາລຽນ ເປໂຕໄດ້ກ່າວວ່າ *ìພຣະເຈົ້າບໍ່ຊົງເລືອກໜ້າຜູ້ໃດ ແຕ່ໃນທຸກຊາດຜູ້ໃດທີ່ຢຳເກງພຣະອົງແລະປະຕິບັດຖືກຕາມສິນທັມ ກໍເປັນທີ່ຊອບພຣະທັຍພຣະອົງî* (ກິຈການ **10: 34). *ìທຸກໆຄົນທີ່ເຊື່ອວາງໃຈໃນພຣະອົງນັ້ນຈຳໄດ້ຮັບຄວາມຍົກຜິດບາບເພາະພຣະນາມຂອງພຣະອົງ ຂະນະທີ່ເປໂຕຍັງກ່າວຢູ່ນັ້ນພຣະວິນຍານພໍຣິສຸດໄດ້ສະເດັດລົງມາເທິງຄົນທັງປວງທີ່ກຳລັງຟັງພຣະທັມນັ້ນî*** (ກິຈການ **10: 43-44).** ແປວ່າຄວາມພົ້ນນັ້ນໄດ້ມາໂດຍທາງຄວາມເຊື່ອ ຜູ້ໃດເຊື່ອຜູ້ນັ້ນກໍພົ້ນແລະຜູ້ພົ້ນບໍ່ແມ່ນລອດພົ້ນດ້ວຍການປະຕິບັດຕາມກົດ. *ìແຕ່ພວກເຮົາເຊື່ອວ່າເຮົາຈະໄດ້ພົ້ນໂດຍພຣະຄຸນຂອງພຣະອົງເຈົ້າເຢຊູ ເໝືອນຢ່າງເຂົາî* (ຂໍ້ **11).**

**3.** ຂໍ້ **12** ຄົນທັງປວງກໍຍອມຟັງບາຣະນາບາແລະໂປໂລເລົ່າເຣື່ອງການປະກາດໃຫ້ພວກຕ່າງຊາດຟັງ

## <u>ສລຸບຜົນຂອງກອງປະຊຸມຫລວງ</u> (15:13-35)

**1.** ຂໍ້ **13-21** ເມື່ອບາຣະນາບາແລະໂປໂລກ່າວຈົບແລ້ວຢາໂກໂບໄດ້ເພີ້ມເຕີມໃຈຄວາມສຳຄັນຄື

ກ. ເພິ່ນອ້າງເຖິງມີຄຳຂຽນໄວ້ເປັນລາຍລັກອັກສອນ ຂໍ້ **16-18**

ຂ. ເພິ່ນສເນີໃຫ້ມີຣະບຽບເປັນລາຍລັກອັກສອນ ຂໍ້ **20-21**

**2.** ກອງປະຊຸມເຢຣູຊາເລັມຕົກລົງເຫັນດີຂຽນຂໍ້ຫ້າມເປັນລາຍລັກອັກສອນໂດຍມອບໃຫ້ໂປໂລແລະບາຣະນາບາໄປອ່ານໃຫ້ຄຣິສຕຽນອັນຕີໂອເຊັຽໄດ້ຮັບຊາບ.

*ດຣ. ທຸມພັນ ວົງສຸຣິດທ໌*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 12
# <u>ເປັນພະຍານໃນຫລາຍແບບວິທີ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ກິຈການ **16: 25-34; 17:1-4, 16-34**

**<u>ພູມຫລັງຂອງພຣະຄັມພີ:</u>** ກິຈການ **15:36--17:34**

**<u>ຈຸດສຳຄັນສຳລັບບົດຮຽນນີ້:</u>** ໂປໂລນຳຂ່າວປະເສີດໄປຫາຄົນຕາມລັກສະນະຂອງເຂົາເຈົ້າ.

**<u>ຄຳຖາມເພື່ອຄົ້ນຄວ້າ:</u>** ເຮົາຈະນຳຂ່າວປະເສີດໄປຫາຊົນຊາດອື່ນແນວໃດ?

**<u>ຈຸປສົງຂອງບົດຮຽນນີ້:</u>** ເພື່ອອຸທິດຕົນຮຽນຮູ້ໃນການປ່າວປະກາດຕໍ່ຊົນຊາດອື່ນໆ

## <u>ຄຳນຳ</u>

ວັນນີ້ເຮົາຈະໄດ້ຮຽນແບບແຜນການປະກາດຂອງໂປໂລທີ່ມີຫລາຍວັກຫລາຍຕອນ ເຊັ່ນທ່ານວາງແຜນກັບບາຣະນາບາຈະໄປຢ້ຽມຢາມໂບດຕ່າງໆ, ແຕ່ພຣະເຈົ້າປ່ຽນແຜນການຂອງເພິ່ນໂດຍໃຫ້ເຫັນນິມິດ, ໂປໂລປະກາດໃນເວລາຢູ່ໃນຄຸກຈົນນາຍທັມມະໂຮງຮັບເຊື່ອ, ເພິ່ນປະກາດກັບນາງລີເດັຽແມ່ຄ້າຂາຍຜ້າ, ເພິ່ນປະກາດກັບຍິງທີ່ມີຜີສິງ, ເພິ່ນປະກາດໃນສະພາໃຫຍ່ຈົນສະມາຊິກສະພາຮັບເຊື່ອ.

**1.** ຂຽນລົງກະດານວ່າ ˥ຮ້ານອາຫານໃໝ່ຈະເປີດໃນສອງອາທິດຂ້າງໜ້າ˥ ຖາມນັກຮຽນວ່າ ປະຊາຊົນໃນແຖບນັ້ນຈະຮູ້ໄດ້ແນວໃດວ່າຮ້ານອາຫານຈະເປີດ? ໃຫ້ໂອກາດນັກຮຽນຕອບຈັກສອງສາມຄົນ.

**2.** ຄຳຕອບອາດມີວ່າ, ຕິດປະກາດ, ປະກາດທາງທີວີ, ວິທະຍຸ, ໜັງສືພິມ, ສົ່ງຂ່າວທາງໄປສະນີໂດຍມີຄິວພອນ ແລະອື່ນໆ ແລະຖາມນັກຮຽນວ່າ ທ່ານຄິດວ່າອັນໃດຈະດີກວ່າກັນ? <u>ຄຳຕອບ:</u> ແຕ່ລະຄົນບໍ່ຄືກັນ ລາງຄົນມັກເບິ່ງທີວີ, ລາງຄົນມັກຟັງວິທະຍຸຕອນຂັບຣົດ, ລາງຄົນມັກໃຊ້ຄອມພິວເຕີ, ລາງຄົນມັກໄຈ້ໜັງສືພິມຫາຄິວພອນ ສລຸບແລ້ວທຸກຢ່າງດີສຳລັບລາງຄົນ. ດັ່ງນັ້ນການປະກາດຂອງໂປໂລກໍເຮັດທຸກຢ່າງເພື່ອຊະນະລາງຄົນ. ເຮົາຈະມາເບິ່ງວິທີປະກາດຂອງໂປໂລ.

## <u>ປະກາດໃນຂະນະທີ່ຖືກຄຸກ</u> (ກິຈການ 16:25-34)

ການປະກາດຂ່າວປະເສີດສ່ວນຫລວງຫລາຍຄົນມັກຈະເຂົ້າໃຈວ່າແມ່ນການເວົ້າເທົ່ານັ້ນ ຄວາມຈິງແລ້ວການປະກາດຂ່າວປະເສີດ ແມ່ນທັງການເວົ້າ, ການເຮັດ ແລະການສະແດງອອກຮວມກັນ. ແຜນການຂອງໂປໂລແລະຊີລາຈະແບ່ງກັນອອກໄປຢ້ຽມຢາມໂບດທຸກເມືອງທີ່ໄດ້ປະກາດມາແລ້ວ**(15:36).** ແຕ່ພຣະເຈົ້າມີງານອື່ນທີ່ສຳຄັນກວ່າຈຶ່ງສຳແດງນິມິດໃຫ້ໂປໂລເຫັນໃນເວລາກາງຄືນ **(**ອ່ານ **16:9).**

ເມື່ອເດີນທາງມາເຖິງເມືອງຟີລິປອຍ ເມືອງເອກຂອງມາເກໂດເນັຽໂປໂລໄດ້ພັກຢູ່ທີ່ນັ້ນຫລາຍວັນ ຈົນເຖິງວັນຊະບາໂຕ ໂປໂລແລະຊີລາກໍພາກັນອອກໄປຊອກບ່ອນໄຫວ້ວອນນະມັສການພຣະເຈົ້າກໍໄດ້ພົບກັບກຸ່ມຜູ້ຍິງກຸ່ມນຶ່ງຢູ່ທີ່ນັ້ນ ແລ້ວໂປໂລກໍຕັ້ງຕົ້ນສົນທະນາກັບເຂົາແລ້ວເວົ້າຂ່າວປະເສີດໃຫ້ເຂົາຟັງ ໃນນັ້ນມີ ນາງລີ

ເດັ່ງແມ່ຄ້າຂາຍຜ້າສົນໃຈຟັງເປັນພິເສດ ເມື່ອຟັງແລ້ວນາງກໍຮັບເຊື່ອແລະຮັບບັບຕິສະມາທັງຄົວເຮືອນ. (ກິຈການ **16:11-15).**

ຕໍ່ມາໂປໂລແລະຊີລາກໍອອກໄປເພື່ອຈະໄຫວ້ວອນອີກ ຄັ້ງນີ້ທ່ານທັງສອງໄດ້ພົບກັບຍິງມີຜີສິງແລ້ວອັຄສາຈຶ່ງຂັບໄລ່ຜີອອກ *ìໃນພຣະນາມແຫ່ງພຣະເຢຊູຄຣິດ ກູສັ່ງມຶງຈົ່ງອອກຈາກຍິງນັ້ນເສັຽî ມັນກໍອອກມາໃນເວລານັ້ນ* (ຂໍ້ **18).** ແລ້ວນາງກໍດີເປັນປົກກະຕິ, ດ້ວຍການດີນີ້ເອງທາງເຈົ້າໜ້າທີ່ຈຶ່ງຈັບໂປໂລແລະຊີລາຂັງຄຸກ. ໃນຂະນະທີ່ຢູ່ໃນຄຸກຖືກລ່າມໂສ້ຕິດກັບຂື່ນັ້ນອັຄສາວົກທັງສອງບໍ່ໄດ້ຈົ່ມວ່າ, ບໍ່ໂສກເສົ້າ ແຕ່ກັບຮ້ອງເພງສັຣເສີນພຣະເຈົ້າ ໂດຍວິທີນີ້ນັກໂທດກໍໄດ້ເຫັນແລະໄດ້ຍິນຄຳພະຍານຂອງທ່ານທັງສອງ. ເມື່ອຄຸກຖືກເປີດດ້ວຍແຜ່ນດິນໄຫວ (ຄົນຂອງພຣະເຈົ້າບໍ່ມີໃຜຂັງໄດ້) ອັຄສາວົກບໍ່ໄດ້ໜີ ເຫດທີ່ເພິ່ນບໍ່ໜີນັ້ນເອງໄດ້ເຮັດໃຫ້ນາຍທັມມະໂຮງກັບໃຈຮັບເຊື່ອແລະບັບຕິສະມາທັງຄົວເຮືອນ.

## <u>ໂປໂລປະກາດທີ່ກຸງອາແຖນ</u> (ກິຈການ 17:16-33)

ເມື່ອຖືກປ່ອຍອອກຈາກຄຸກແລ້ວອັຄສາວົກທັງສອງໄດ້ເດີນທາງໄປເມືອງເທຊະໂລນິກແລະໄດ້ປະກາດເປັນພະຍານໃນພຣະວິຫານທີ່ນັ້ນໂດຍບອກເຂົາວ່າ *ìພຣະເຢຊູຜູ້ທີ່ເຮົາປະກາດແກ່ທ່ານທັງຫລາຍ ຜູ້ນີ້ແຫລະເປັນພຣະຄຣິດî* (ກິຈການ **17: 4).** ແລ້ວບາງຄົນໃນພຣະວິຫານເມືອງເທຊະໂລນິກກໍເຊື່ອ ແລະ ຕິດຕາມທ່ານທັງສອງ. ເມື່ອມີຄົນເຊື່ອແລະຕິດຕາມໂປໂລແລະຊີລາໄປພວກຢິວກໍເຫິງສາແລະປອງຮ້າຍອັຄສາວົກທັງສອງແຕ່ພີ່ນ້ອງທີ່ເຊື່ອແລ້ວຊ່ອຍເຫລືອອັຄສາວົກທັງສອງໜີອອກເມືອງໃນເວລາກາງຄືນ (ຂໍ້ **10).**

ເມື່ອໂປໂລໄດ້ເດີນທາງເຖິງກຸງອາແຖນແລ້ວກໍສັງເກດເຫັນວ່າທຸກຫົນທຸກແຫ່ງເຕັມໄປດ້ວຍຮູບປັ້ນພຣະເລັກພຣະນ້ອຍຂອງຊາວໂຣມັນ, ໂປໂລຈຶ່ງໄປປຶກສາຫາລືກັບພວກຢິວໃນວິຫານ ແລ້ວຈຶ່ງເກີດມີການໂຕ້ຖຽງກັນກັບພວກນັກປາດ **(Philosophers)** ເຂົາຈຶ່ງຈັບໂປໂລໄປສືບຖາມທີ່ສະພາອາເຣໂອປາໂຄ (ຂໍ້ **18-21).** ຫຼັງຈາກເຂົາສືບສວນແລ້ວໂປໂລກ່າວຕອບເຂົາ ເມື່ອຈົບແລ້ວກໍມີຫລາຍຄົນໄດ້ເຊື່ອແລະຕິດຕາມພຣະເຢຊູ.

*ດຣ. ທຸມພັນ ວົງສຸຣິດທ໌*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 13
# ບໍ່ມີສິ່ງໃດປິດບັງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ກິຈການ **28:17-31**

**ພູມຫລັງຂອງພຣະຄັມພີ:** ກິຈການ **21:17--28:31**

**ຈຸດສຳຄັນສຳລັບບົດຮຽນນີ້:** ໂປໂລໄດ້ປະກາດໂດຍບໍ່ມີຫຍັງປິດບັງ

**ຄຳຖາມເພື່ອຄົ້ນຄວ້າ:** ແມ່ນຫຍັງເປັນເຄື່ອງຖ່ວງດຶງການປະກາດຂອງທ່ານ**?**

**ຈຸປສົງຂອງບົດຮຽນນີ້:** ເພື່ອຊ່ອຍທ່ານຈະປະກາດຢ່າງສງ່າຜ່າເຜີຍ**.**

## ຄຳນຳ

ມັດທາຍມີ **28** ບົດ ແລະລົງທ້າຍດ້ວຍການສັ່ງໃຫ້ອອກໄປປະກາດ**,** ກິຈການເລີ້ມຕົ້ນດ້ວການຮັບພຣະວິນຍານບໍ່ຣິສຸດແລ້ວອອກໄປປະກາດ ແລະພຣະທັມກິຈການໄດ້ລົງທ້າຍດ້ວຍການປະຕິບັດຄຳສັ່ງໃຫ້ອອກໄປທົ່ວໂລກເພື່ອປະກາດພຣະນາມແຫ່ງພຣະເຢຊູຄຣິດໂດຍການລົ້ມລຸກຄຸນຄານ ແຕ່ບໍ່ເຫັນວ່າມີສິ່ງໃດຕ້ານທານຂ່າວປະເສີດໄວ້ໄດ້**.**

## ທີ່ກຸງໂຣມ (ກິຈການ:28:17-22)

ໂປໂລບໍ່ໄດ້ປ່ອຍປະເວລາໃຫ້ເສັຽໄປຊື່ໆ ເພິ່ນໄດ້ເຊີນບັນດາພວກຜູ້ໃຫຍ່ຂອງຊາວຢິວມາປະຊຸມເພື່ອເລົ່າເຫດການໆປະກາດດ້ວຍອຸປສັກຕ່າງໆນາໆ ແຕ່ບໍ່ມີອຸປສັກອັນໃດຍັບຍັ້ງບໍ່ໃຫ້ເພິ່ນປະກາດຂ່າວປະເສີດເຣື່ອງຄວາມຈິງໄດ້**,** ແມ່ນແຕ່ທາງຣາຊການຫ້າມປາມແລະໃສ່ຄຸກດ້ວຍການຖືກລ່າມໂສ້ໂປໂລກໍບໍ່ທໍ້ຖອຍໃນເຫດການເຫລົ່ານັ້ນ**.** ທາງອຳນາດການປົກຄອງໄດ້ໄຕ່ສວນຢ່າງລະອຽດແຕ່ກໍບໍ່ເຫັນຄວາມຜິດຕໍ່ກົດໝາຍແຕ່ພວກຢິວທີ່ເປັນພວກທີ່ນັບຖືກົດຂອງໂມເຊ ເຫັນວ່າໂປໂລໄດ້ປະກາດຂັດຕໍ່ກົດຣະບຽບຂອງໂມເຊ ດ້ວຍເຫດນີ້ພວກຢິວຈຶ່ງບໍ່ຍອມປ່ອຍໃຫ້ໂປໂລປະກາດຢ່າງເດັດຂາດ**.** ການຂົ່ມເຫັງຄຣິສຕະຈັກຖືກແບ່ງອອກເປັນສອງປະເພດດ້ວຍກັນຄື;

**1.** ການຂົ່ມເຫັງຈາກຜູ້ມີອຳນາດທາງບ້ານເມືອງ ທີ່ບໍ່ຍອມໃຫ້ປ່າວປະກາດເຣື່ອງຂອງພຣະເຢຊູຄຣິດ ເພາະເຂົາຄຶດວ່າເຣື່ອງຂອງພຣະເຢຊູເປັນສາສນາຂອງຊາວຕ່າງຊາດ**.**

**2.** ການຖືກຂົ່ມເຫງຂອງສາສນາປະຈຳທ້ອງຖິ່ນທີ່ຫ້າມ ເພາະວ່າເຂົາມີສາສນາປະຈຳຊາດແລ້ວແລະບໍ່ຢາກໃຫ້ປະຊາຊົນໄດ້ຍິນເຣື່ອງຂອງພຣະຕ່າງຊາດ**.**

## ແຕ່ເຊົ້າຮອດຄ່ຳ (28:23-28)

ໂປໂລໄດ້ໃຊ້ເວລາຕັ້ງແຕ່ເຊົ້າຮອດຄ່ຳໂອ້ລົມກັບຄຣິສຕຽນຢິວທີ່ນັບຖືກົດເດີມ**,** ເພິ່ນໃຊ້ພຣະຄັມພີເດີມເພື່ອເປັນຫີນທາງຊີ້ແນະແນວທາງໃຫ້ເຊື່ອມໂຍງກັບພຣະຄັມພີໃໝ່ ເມື່ອມາຮອດພຣະຄັມພີໃຫມ່ແລ້ວໂປໂລໄດ້

ຊັກຊວນໃຫ້ຮັບເອົາພຣະຄັມພີໃຫມ່ໂດຍເອົາຕົວເພິ່ນເອງເປັນພະຍານວ່າ *ìເຮົາບໍ່ມີຄວາມລະອາຍໃນຂ່າວປະເສີດ ດ້ວຍວ່າຂ່າວປະເສີດນັ້ນເປັນຣິດເດດຂອງພຣະເຈົ້າî* ແລະຍັງບອກອີກວ່າພຣະເຢຊູເປັນພຣະຜູ້ທີ່ເຂົາທັງຫລາຍລໍຄອຍ ແລ້ວກໍມີລາງຄົນທີ່ຟັງຢູ່ກໍກັບໃຈເຊື່ອແລະລາງຄົນກໍປະຕິເສດເໝືອນເດີມ.

ໂປໂລໄດ້ລົງທ້າຍການສົນທະນາທັມດ້ວຍກ່າວເຖິງພຣະຜູ້ເປັນເຈົ້າໄດ້ກ່າວກັບຜູ້ທຳນວາຍເອຊາຢາບັນພະບຸຣຸດຂອງຊາດຢິວ ໃນເອຊາຢາ **6:9-11** ເປັນພຣະທັມທີ່ຄຣິສຕຽນຍິວຮູ້ດີ. ແລ້ວໂປໂລກ່າວຕໍ່ຈາກນັ້ນວ່າ *ìເຈົ້າທັງຫລາຍຈະໄດ້ຍິນແທ້ ແຕ່ຈະບໍ່ເຂົ້າໃຈຈັກເທື່ອ ຈະໄດ້ເຫັນແທ້ ແຕ່ຈະບໍ່ໄດ້ສັງເກດຈັກເທື່ອດ້ວຍວ່າໃຈຂອງພົລເມືອງນີ້ກໍປືກຫນາ ຫູກໍຫນັກ, ຕາຂອງເຂົາກໍຫລັບເສັຽ ຢ້ານວ່າເຂົາຈະສັງເກດດ້ວຍຕາ ແລະຈະໄດ້ຍິນດ້ວຍຫູ ແລະຈະຮູ້ດ້ວຍໃຈ ແລ້ວຈະຕ່າວກັບມາ ແລະເຮົາຈະເຮັດໃຫ້ເຂົາດີî* (ກິຈການ **28:26**) ດັ່ງນັ້ນມີລາງຄົນຈຶ່ງຮັບເຊື່ອໃນວັນນັ້ນ.

## <u>ຢ່າໃຫ້ສິ່ງໃດໆມາກີດກັ້ນທ່ານ</u> (ກິຈການ 28:28-31)

ໂປໂລໄດ້ທັບມ້າງທຸກຢ່າງທີ່ກີດຂວາງເພິ່ນບໍ່ໃຫ້ປະກາດເຣື່ອງຄວາມຈິງໃນພຣະເຢຊູຄຣິດແນວໃດນັ້ນ ຄຣິສຕຽນກໍໄດ້ຮຽນແບບຕໍ່ໆກັນມາຈົນເຖິງເທົ່າທຸກວັນນີ້. ຊີວິດຂອງໂປໂລ ເຖິງແມ່ນເຂົາຂັງເພິ່ນໄວ້ ກໍຂັງແຕ່ໂຕເພິ່ນເທົ່ານັ້ນ ສ່ວນຂ່າວປະເສີດເຂົາບໍ່ສາມາດຂັງຫລືກີດຂວາງໄດ້ ເພິ່ນຍັງປະກາດຕໍ່ໄປເລື້ອຍໆ*ì ໂປໂລໄດ້ອາສັຍຢູ່ໃນເຮືອນທີ່ຕົນເອງເຊົ່າ ແລະໄດ້ຕ້ອນຮັບຄົນທັງປວງທີ່ມາຫາ ທັງປະກາດຣາຊອານາຈັກຂອງພຣະເຈົ້າ ແລະສັ່ງສອນເຣື່ອງອັນກ່ຽວກັບພຣະອົງເຈົ້າເຢຊູຄຣິດຢ່າງເປີດເຜີຍ ໂດຍບໍ່ມີການຂັດຂວາງî* (ຂໍ້ **30-31**). ແປວ່າເຖິງແມ່ນເພິ່ນຢູ່ທີ່ລຳບາກກໍຕາມເພິ່ນກໍປະກາດດ້ວຍເປີດເຜີຍ ໂດຍບໍ່ຢ້ານແຕ່ປະການໃດ.

*ດຣ. ຫຸມພັນ ວົງສຸຣິດທ໌*